ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
*************************

ກອງເລຂາ ຄະນະກຳມະການ ປະສານງານ ເລກທີ 0176 ກຄປ.ກທລ
ກອງທຶນໂລກຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ

# ບົດລາຍງານການລົງຕິດຕາມວຽກງານ
# ຢູ່ແຂວງບໍລິຄຳໄຊ, ວັນທີ 28 - 31 ມີນາ 2016

**ຈຸດປະສົງ**:
ເພື່ອລົງໄປຕິດຕາມຊຸກຍູ້ ການຈັດຕັ້ງປະຕິບັດໂຄງການ ກອງທຶນໂລກ ຕ້ານເອດ ວັນນະໂລກ ແລະ ໄຂ້ຍຸງ ຢູ່ຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນສຸກສາລາ ຕາມແຜນການທີ່ໄດ້ວາງໄວ້ ໂດຍເໜັ້ນໜັກໃສ່ວຽກງານຫຼາຍດ້ານເຊັ່ນ: ການເງິນ, ການຈັດຊື້, ການຈັດຕັ້ງປະຕິບັດ, ການລາຍງານ ແລະ ການຕີລາຄາປະເມີນຜົນລວມ. ເພື່ອເຮັດໃຫ້ໂຄງການຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ ທີ່ໄດ້ຮັບການຊ່ວຍເຫຼືອຈາກກອງທຶນໂລກ ໄດ້ປະຕິບັດຖືກຕ້ອງ ແລະ ປະສົບຜົນສຳເລັດຕາມເປົ້າໝາຍທີ່ໄດ້ວາງໄວ້.

**ສະຖານທີ່ລົງປະຕິບັດວຽກງານໃນຄັ້ງນີ້:**
- ວັນທີ 28/03/2016: - ພະແນກສາທາລະນະສຸກ ແຂວງບໍລິຄຳໄຊ
  - ຂະແໜງຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ
- ວັນທີ 29/03/2016: - ຫ້ອງການສາທາລະນະສຸກເມືອງປາກກະດິງ
  - ໂຮງໝໍເມືອງປາກກະດິງ
  - ໜ່ວຍງານຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ
  - ສຸກສາລານ້ຳທອນ
  - ສຸກສາລາປາກກະດິງ
- ວັນທີ 30/03/2016: - ຫ້ອງການສາທາລະນະສຸກເມືອງທ່າພະບາດ
  - ໂຮງໝໍເມືອງທ່າພະບາດ
  - ໜ່ວຍງານຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ
  - ສຸກສາລາເຂດຫ້ວຍເລີກ
  - ສຸກສາລາເຂດບ້ານທວຍ

**ສັງລວມຜົນໄດ້ຮັບ**
ທີມງານໄດ້ຮ່ວມປຶກສາຫາລືກັບ ພະແນກສາທາລະນະສຸກແຂວງ, ເມືອງ ແລະ ສຸກສາລາ ກ່ຽວກັບສະພາບການຈັດຕັ້ງປະຕິບັດວຽກງານຕົວຈິງຂອງໂຄງການຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ ພາຍໃນແຂວງ ຊຶ່ງໄດ້ຮັບການຊ່ວຍເຫຼືອຈາກກອງທຶນໂລກ ເພື່ອຖອດຖອນບົດຮຽນຈຸດດີ, ຈຸດອ່ອນ ແລະ ປັບປຸງແກ້ໄຂບັນຫາຂໍ້ຄົງຄ້າງ, ຊຶ່ງສາມາດສະຫຼຸບສັງລວມສິ່ງທີ່ພົບເຫັນທັງໝົດ ທີ່ພົວພັນເຖິງການຈັດຕັ້ງວຽກງານໂຄງການຂອງສາມພະຍາດ ພ້ອມດ້ວຍຂໍ້ສະເໜີແນະນຳເພື່ອປັບປຸງແກ້ໄຂບັນຫາດັ່ງນີ້:

| 1. ດ້ານການເງິນ | | | |
|---|---|---|---|
| **ສິ່ງທີ່ພົບເຫັນ** | **ຂັ້ນແຂວງ** | **ຂັ້ນເມືອງ** | **ຂັ້ນສຸກສາລາ** |
| **ຄວາມຄືບໜ້າ** | **ໂຄງການເອດ**<br>• ໄດ້ຮັບທຶນຈາກກອງທຶນໂລກ 6 ເດືອນທ້າຍປີ 2015 ຈຳນວນທັງໝົດ Q3 ໄດ້ຮັບ 37,891,522 ກີບ ແລະ Q4 ໄດ້ຮັບ 33,451,290 ກີບ ເພື່ອເຄື່ອນໄຫວວຽກງານຕ້ານເອດ ແລະ ພະຍາດຕິດຕໍ່ທາງເພດສຳພັນປີ 2015<br>- ລົງຕິດຕາມຊຸກຍູ້ຂັ້ນເມືອງ 01 ຄັ້ງ, 5 ຕົວເມືອງຄື: ປາກຊັນ, ບໍລິຄັນ, ທ່າພະບາດ, ປາກກະດິງ, ຄຳເກີດ, ວຽງທອງ ງົບປະມານ 3,718,000 ກີບ<br>- ກອງປະຊຸມປະຈຳໄຕມາດຮ່ວມກັບເພື່ອນຮ່ວມງານຢູ່ຂັ້ນແຂວງ ງົບປະມານ 6,278,000 ກີບ<br>- ຝຶກອົບຮົມໃຫ້ອາສາສະມັກ OW. MSM ງົບປະມານ 2,957,000 ກີບ<br>- ລົງຕິດຕາມກິດຈະກຳຂອງ OW. MSM ງົບປະມານ 5,817,000 ກີບ<br>- ຝຶກອົບຮົມໃຫ້ MSM ຈຳນວນ 17 ຄົນ ງົບປະມານ 9,922,000 ກີບ<br>- ລົງໃຫ້ຄວາມຮູ້ ແລະ ຈ່າຍເງິນຈູງໃຈໃຫ້ແກ່ ຊພຊ ຈຳນວນ 17 ຄົນ ໃນ 05 ຕົວເມືອງຄື: ປາກຊັນ, ປາກະດິງ, ທ່າພະບາດ, ບໍລິຄັນ, ຄຳເກີດ ງົບປະມານ 32,966,000 ກີບ<br>- ລົງຕິດຕາມວຽກງານພາກສະໜາມຂອງຜູ້ປະສານງານກອງເລຂາໃນການຕິດຕາມກິດຈະກຳ MSM ງົບປະມານ 9,211,000 ກີບ<br>- ລົງຢ້ຽມຢາມບ້ານຜູ້ຕິດເຊື້ອ ຈຳນວນ 11 ຄອບຄົວ ໃນ 03 ຕົວເມືອງຄື: ປາກຊັນ, ປາກະດິງ, ທ່າພະບາດ ງົບປະມານ 4,800,000 ກີບ<br>- ລວມກຸ່ມຜູ້ຕິດເຊື້ອ ງົບປະມານ 9,600,000 ກີບ<br>- ລົງຕິດຕາມຄົນເຈັບຂາດຢາໃນ 03 ຕົວເມືອງຄື: ປາກຊັນ, ປາກະດິງ, ທ່າພະບາດ ງົບປະມານ 2,560,000ກີບ<br>• ໄດ້ຮັບງົບປະມານຈາກລັດຖະບານປີ 2014-2015 ທັງໝົດ: 24,410,000 ກີບ<br>- ໂຄສະນາໃຫ້ຄວາມຮູ້ພື້ນຖານກ່ຽວກັບ | ❖ **ເມືອງປາກກະດິງ:**<br>**ໂຄງການເອດ**<br>• ບໍ່ມີເງິນເຄື່ອນໄຫວວຽກງານ<br>• ເງິນທີ່ໄດ້ມາແມ່ນໄດ້ຈາກພາກສ່ວນອື່ນ<br><br>**ໂຄງການໄຂ້ຍຸງ:**<br>• ງົບປະມານກິດຈະກຳໄຂ້ຍຸງ 3.366.000 ກີບ<br>- ເມືອງນຳໃຊ້ເຂົ້າໃນການລົງຊຸກຍູ້ຕິດຕາມສຸກສາລາ ແລະ ບ້ານ ຈຳນວນ 2,124,000 ກີບ<br>- ສຸກສາລາລົງເກັບກຳຂໍ້ມູນຂັ້ນບ້ານ 1,242,000 ກີບ<br>• ງົບປະມານກິດຈະກຳໄຂ້ ເລືອດອອກ ແລະ ກາຝາກ 4,645,000 ກີບ<br>- ກອງປະຊຸມຄະນະໂຮງໝໍເມືອງຮ່ວມກັບສຸກສາລາ ຕ້ານໄຂ້ເລືອດອອກຈຳນວນ 3,205,000 ກີບ<br>- ລົງສຳຫຼວດໜອນນ້ຳ 6 ບ້ານເປົ້າໝາຍ 1,440,000 ກີບ<br><br>**ວັນນະໂລກ:**<br>• ໄດ້ຮັບເງິນກິດຈະກຳທັງໝົດ 6,039,000 ກີບ ຈ່າຍແລ້ວ 5,349,000 ກີບ ຍັງເຫຼືອ 690,000ກີບ.<br>• ຈ່າຍເງິນຄ່ານຳສິ່ງຕົວຢ່າງຈາກສຸກສາລາຫາເມືອງ<br><br>❖ **ເມືອງທ່າພະບາດ:**<br>• ເອດ: ບໍ່ມີງົບເຄື່ອນໄຫວວຽກງານມີແຕ່ສະໜອງນ້ຳຢາກວດເລືອດເພື່ອຊອກຫາການຕິດ ເຊື້ອເຮສໄອວີແບບໄວ (HIV Rapid Test)<br><br>**ໄຂ້ຍຸງ:**<br>• ໄດ້ຮັບເງິນຈາກກອງທຶນໂລກຈຳນວນ 42,000,000 ກ່ວາກີບ ໃນປີ 2014-2015 | **ວັນນະໂລກ:**<br>• ໄດ້ຮັບເງິນສະເພາະຄ່າສິ່ງຕົວຢ່າງເທົ່ານັ້ນ<br>• ເງິນເຮັດກິດຈະກຳຊອກຄົ້ນແມ່ນແຊມຊຶມນຳວຽກງານອື່ນສ່ວນຫຼາຍ |

| | | | |
|---|---|---|---|
| | ພະຍາດເອດ/ພຕພ, ວິທີໃຊ້ຖົງຢາງອະນາໄມ, ສະຖານທີ່ໄປກວດເລືອດພາຍໃນແຂວງ, ວິທີເຂົ້າຫາກຸ່ມເປົ້າໝາຍ, ວິທີຢູ່ຮ່ວມກັນກັບຜູ້ຕິດເຊື້ອໂດຍບໍ່ມີການຈໍາແນກແລະລັງກຽດໄດ້ 02 ເມືອງຄື: ປາກກະດິງ, ຄໍາເກີດ ລວມທັງໝົດ 04 ບ້ານ. ລວມຜູ້ເຂົ້າຮ່ວມທັງໝົດ 253 ຄົນ, ຍິງ 146 ຄົນ. ງົບປະມານ 4,410,000 ກີບ<br>- ຝຶກອົບຮົມແບບຟອມລາຍງານໃຫ້ແກ່ພະນັກງານຂັ້ນແຂວງ, ໂຮງໝໍແຂວງ, ປກສ, ປກຊ ແລະ 07 ຕົວເມືອງ ຈໍານວນ 26 ຄົນ, ຍິງ 18 ຄົນ. ງົບປະມານ 9,00,000 ກີບ.<br>- ກອງປະຊຸມສະຫຼຸບປີຂອງວຽກງານຕ້ານເອດ/ພຕພ ຢູ່ເມືອງວຽງທອງ ລວມທັງໝົດ 50 ຄົນ. ງົບປະມານ 11,000,000 ກີບ.<br>• ໜ່ວຍງານຕ້ານເອດ ແຂວງບໍລິຄໍາໄຊລາຍງານວ່າ:<br>• ໄດ້ຮັບທຶນຈາກກອງທຶນໂລກທັງໝົດ Q1+Q4 ແຕ່ເດືອນ 1-12ປີ 2016 ຈໍານວນ 30,068,000 ຫຼື 3,718$ ຈໍານວນດັ່ງກ່າວນີ້ແມ່ນລວມທັງຄ່າ:<br>- ຄ່າບໍລິຫານຫ້ອງການ, ຄ່ານໍ້າ, ຄ່າໄຟຟ້າ, ໂທລະສັບ, ອິນເຕີແນັດ, ເຄື່ອງໃຊ້ຕ່າງໆ ຈໍານວນ 15,524,000ກີບ<br>- ເງິນສະໜັບສະໜູນພະນັກງານບັນຊີການເງິນ 1 ທ່ານຈໍານວນ 8,244,000 ກີບ<br>- ເງິນສະໜັບສະໜູນພະນັກງານບັນຊີສາງ 1 ທ່ານຈໍານວນ 6,300,000 ກີບ<br>• <u>**ໝາຍເຫດ:**</u> LaoPha ບໍ່ໄດ້ໃຫ້ທຶນສະໜັບສະໜູນແລ້ວ<br><br>**ໂຄງການໄຂ້ຍຸງ**<br>• ແຕ່ປີ 2014-2015 ບໍ່ມີເງິນງົບປະມານ<br>• ປີ 2016 ໄດ້ຮັບເງິນ 50 ລ້ານ<br>• ສາມາດປະຕິບັດກົດລະບຽບການເງິນຂອງກອງທຶນໂລກໄດ້ດີ<br><br>**ໂຄງການວັນນະໂລກ**<br>• ສູນກາງໄດ້ໂອນເງິນໃຫ້ແຂວງໄດ້ຮັບເງິນໄຕມາດທີ່ 3 ປີ 2015: 61,686,000 ກີບ, ໄຕມາດທີ່ 4 ປີ2015: 53,549,000 ກີບ | • ມີເງິນແຊກຊຶມສິ່ງເສີມມາໝູນໃຊ້<br><br>**ວັນນະໂລກ:**<br>• ໄດ້ຮັບເງິນຈາກແຂວງແລ້ວ<br>• ມີເງິນຢ້ຽມຢາມບ້ານ<br>• ມີເງິນບໍລິຫານຫ້ອງການ<br>• ມີເງິນລົງຕິດຕາມເຮັດກິດຈະກໍາ<br>• ມີເງິນແຊກຄຸມສິ່ງເສີມເຂົ້າມາມີສ່ວນຮ່ວມ | |

| | | | |
|---|---|---|---|
| **ຂໍ້ຫຍຸ້ງຍາກ** | **ໂຄງການເອດ**<br>• ງົບປະມານເຂົ້າໃນການເຄື່ອນໄຫວວຽກງານ ກໍ່ຍັງມີຈຳກັດ.<br><br>**ໂຄງການໄຂ້ຍຸງ**<br>• ບໍ່ມີເງິນນຳສົ່ງແຜ່ນແກ້ວ, ການນຳສົ່ງແມ່ນຝາກນຳພະນັກງານທີ່ໄປວຽກ<br>• ການຕິດຕາມຊຸກຍູ້ວຽກງານດ້ານການເງິນຂອງສູນກາງຕໍ່ແຂວງມີພຽງ 1 ຄັ້ງຕໍ່ປີ<br>• ອັດຕາເບ້ຍລ້ຽງພະນັກງານຍັງຕ່ຳ<br><br>**ໂຄງການວັນນະໂລກ**<br>• ເງິນນຳສົ່ງຕົວຢ່າງຍັງຊັກຊ້າ ແລະ ບໍ່ພຽງພໍເນື່ອງຈາກເສັ້ນທາງຫ່າງໄກ<br>• ການໂອນເງິນຈາກສູນກໍ່ຍັງຊັກຊ້າ | **ໂຄງການເອດ**<br>• ບໍ່ມີເງິນລົງຕິດຕາມວຽກງານ<br>• ຂາດພະນັກງານ, ບໍ່ມີວິຊາການສະເພາະໃນການປະຕິບັດວຽກງານໂຄງການ ເປັນເຫດຜົນໃຫ້ມີການລາຍງານຊັກຊ້າ<br>• ຂາດງົບປະມານໃນວຽກງານດ້ານເອດ<br><br>**ໂຄງການໄຂ້ຍຸງ**<br>• ການອະນຸມັດງົບປະມານຊ້າ.<br>• ເງິນສະເພາະລົງຕິດຕາມວຽກງານແມ່ນບໍ່ມີ ຕ້ອງໄດ້ອາໄສເວລາໄປຕິດຕາມວຽກງານອື່ນ<br><br>**ໂຄງການວັນນະໂລກ**<br>• ເງິນບາງກິດຈະກຳຍັງຊັກຊ້າ<br>• ງົບປະມານບໍ່ໄດ້ຕາມແຜນການທີ່ສະເໜີໄປ | **ໂຄງການເອດ**<br>• ບໍ່ມີງົບປະມານເຄື່ອນໄຫວກິດຈະກຳ<br>• ບໍ່ມີເງິນລົງຕິດຕາມວຽກງານ<br><br>**ໂຄງການໄຂ້ຍຸງ**<br>• ອສບ ບໍ່ເອົາໃຈໃສ່ປານໃດ<br>• ການສົ່ງເງິນຈາກເມືອງຫາສຸກສາລາແມ່ນຍັງຊັກຊ້າ<br>• ບໍ່ມີເງິນລົງຕິດຕາມ<br><br>**ໂຄງການວັນນະໂລກ**<br>• ບໍ່ມີງົບປະມານລົງເຄື່ອນໄຫວວຽກງານສຸຂະສຶກສາ<br>• ບໍ່ມີແຜ່ນພາບໂຄສະນາ,<br>• ບໍ່ມີງົບປະມານສະເພາະຕິດຕາມໂຄງການ ອາໄສເງິນແຊກຊຶມຈາກວຽກງານອື່ນ |
| **ຂໍ້ແນະນຳ** | **ໂຄງການເອດ**<br>• ສະເໜີໃຫ້ຜູ້ປະສານງານຕິດຕາມເບິ່ງຕື່ມ<br>• ຄວນມີການສະໜອງງົບປະມານບໍລິຫານໂຄງການໃຫ້ແກ່ຕາໜ່າງຂັ້ນເມືອງ ແລະ ສຸກສາລາ.<br><br>**ໂຄງການໄຂ້ຍຸງ**<br>• ສູນກາງຕ້ອງໂອນເງິນໃຫ້ທັນເວລາຕາມໄຕມາດທີ່ກຳນົດໄວ້ໃນແຜນການ<br>• ແຂວງຕ້ອງເຮັດການສະຫຼຸບໃຫ້ໄວຖືກຕາມໄຕມາດ<br>• ສູນກາງຄວນແກ້ໄຂປັບປຸງອັດຕາເບ້ຍລ້ຽງຂອງພະນັກງານໃຫ້ເໝາະສົມ<br>• ເມືອງຕ້ອງສະຫຼູບກິດຈະກຳໃຫ້ໄວພາຍຫຼັງປະຕິບັດແລ້ວພາຍໃນ 7-10 ວັນ<br>• ສຸກສາລາຕ້ອງສະຫຼູບໃຫ້ໄວຕາມຂອບເຂດເວລາທີ່ກຳນົດໄວ້ ລວມທັງ ອສບ<br>• ສະເໜີໃຫ້ສູນຄົ້ນຄ້ວາຈັດສັນງົບປະມານໃຫ້ຕື່ມ | **ໂຄງການເອດ**<br>• ສ້າງໃຫ້ມີພະນັກງານວິຊາການສະເພາະການເງິນທີ່ຂາດເຂີນ, ຖ້າເປັນໄປໄດ້ໃຫ້ສະເໜີມີການປະກອບສ່ວນຂອງງົບປະມານລັດ<br><br>**ໂຄງການວັນນະໂລກ**<br>• ສະເໜີໃຫ້ຂັ້ນແຂວງລົງມາຕິດຕາມ ແລະ ຈັດສັນງົບປະມານໃຫ້ຕື່ມ | **ໂຄງການເອດ**<br>ບໍ່ມີ<br><br>**ໂຄງການວັນນະໂລກ**<br>• ສະເໜີໃຫ້ເມືອງຈັດຫາງົບປະມານເພື່ອລົງຢ້ຽມຢາມສຸກສາລາຕື່ມ |

| | | | |
|---|---|---|---|
| | **ໂຄງການອັນນະໂລກ**<br>• ຂັ້ນແຂວງຕ້ອງຮັບປະກັນສະຫຼຸບລາຍງານໃຫ້ທັນເວລາຕາມກຳນົດ<br>• ຂໍງົບປະມານໃນການເດີນທາງໃຫ້ເມືອງ ເພື່ອນຳສິ່ງຕົວຢ່າງໃຫ້ໄວຂຶ້ນຕື່ມ ເພື່ອໃຫ້ອັດຕາການຊອກຄົ້ນເພີ້ມຂຶ້ນ | | |

| **2. ດ້ານການຈັດຊື້** | | | |
|---|---|---|---|
| **ສິ່ງທີ່ພົບເຫັນ** | **ຂັ້ນແຂວງ** | **ຂັ້ນເມືອງ** | **ຂັ້ນສຸກສາລາ** |
| **ຄວາມຄືບໜ້າ** | **ໂຄງການເອດ**<br>• ບໍ່ມີການຈັດຊື້<br>• ອຸປະກອນກວດເລືອດພຽງພໍ (Rapid Test) ມີຈຳນວນ 200 ທີ່ນຳໃຊ້ເຂົ້າໃນ 8 ຈຸດທີ່ມີການເຄື່ອນໄຫວ VCT<br><br>**ໂຄງການໄຂ້ຍຸງ**<br>• ໄດ້ສິ່ງແຜນຈັດຊື້ມຸ້ງຈຳນວນ 44,990 ດາງ<br>• ສາມາດປະຕິບັດໄດ້ຕາມຂັ້ນຕອນເອກະສານຂອງກອງທຶນໂລກ<br>• ສາມາດຈັດຊື້ໄດ້ພຽງແຕ່ອຸປະກອນຮັບໃຊ້ຫ້ອງການເທົ່ານັ້ນ<br><br>**ໂຄງການອັນນະໂລກ**<br>• ສູນກາງເປັນຜູ້ຈັດຊື້ ຕາມແຜນການທີ່ໄດ້ສະເໜີ<br>• ໄດ້ຮັບອຸປະກອນ-ຢາ ພຽງພໍແລ້ວ | ❖ ເມືອງປາກກະດິງ:<br>**ໂຄງການເອດ**<br>• ບໍ່ມີການຈັດຊື້<br>• ອຸປະກອນທີ່ໄດ້ຮັບຈາກກອງເລຂາເອດຂັ້ນແຂວງ:<br>- ໄດ້ຮັບ Determine 160 test<br>- ໄດ້ຮັບ Unigold 20 test.<br>- ໄດ້ຮັບ Condom 39 Box.<br><br>**ໂຄງການໄຂ້ຍຸງ**<br>• ໄດ້ຮັບມຸ້ງຈາກຂັ້ນແຂວງຈຳນວນ 1,300 ດາງ<br>• ອຸປະກອນແມ່ນຂັ້ນແຂວງຈັດຊື້ໃຫ້<br>• ຢາກິນມີພຽງພໍ<br><br>**ໂຄງການອັນນະໂລກ**<br>• ແຂວງຈັດຊື້ໃຫ້ | **ໂຄງການເອດ**<br>• ບໍ່ມີການຈັດຊື້<br><br>**ໂຄງການໄຂ້ຍຸງ**<br>• ບໍ່ມີການຈັດຊື້<br>• ອຸປະກອນ ແລະ ຢາ ແມ່ນຂັ້ນແຂວງຈັດສິ່ງໃຫ້<br><br>**ໂຄງການອັນນະໂລກ**<br>• ຢາປິ່ນປົວແມ່ນທາງເມືອງໄດ້ສິ່ງໃຫ້ ສະເພາະແຕ່ສຸກສາລາທີ່ມີຄົນເຈັບເທົ່ານັ້ນ |
| **ຂໍ້ຫຍຸ້ງຍາກ** | **ໂຄງການເອດ**<br>• ຖົງຢາງອະນາໄມບໍ່ພຽງພໍເຂົ້າໃນວຽກງານ VCT.<br>• ບໍ່ມີການຈັດຊື້, ມີແຕ່ຈັດຊື້ໄດ້ພຽງແຕ່ອຸປະກອນຮັບໃຊ້ຫ້ອງການເທົ່ານັ້ນ<br>• ຍັງຂາດອຸປະກອນຮັບໃຊ້ເຂົ້າໃນວຽກງານ ເຊັ່ນ: ສື່ເອເລັກໂຕຣນິກຄົບຊຸດ(ເຄື່ອງສຽງ ,ເຄື່ອງສານເປັນຕົ້ນ)<br><br>**ໂຄງການໄຂ້ຍຸງ**<br>• ການຈັດຊື້ມຸ້ງບໍ່ໄດ້ຕາມຈຳນວນທີ່ສະເໜີຕາມແຜນ<br>• ບໍລິສັດຈັດສິ່ງມຸ້ງບໍ່ໄດ້ສິ່ງຕາມແຜນ 44,990 ດາງ ແຕ່ໄດ້ຮັບຕົວຈິງ 44,250 ດາງ | ❖ **ເມືອງປາກກະດິງ:**<br>**ໂຄງການເອດ**<br>• ບໍ່ມີການຈັດຊື້<br>• ອຸປະກອນຮັບໃຊ້ທີ່ຈຳເປັນໃນການເຮັດວຽກບໍ່ພຽງພໍເຊັ່ນ: ຄອມພິວເຕີເກົ່າ ໃຊ້ງານຊ້າ.<br><br>**ໂຄງການໄຂ້ຍຸງ**<br>• ບໍ່ມີບັນຫາເພາະບໍ່ມີການຈັດຊື້<br><br>**ໂຄງການອັນນະໂລກ**<br>• ອຸປະກອນເອເລັກໂຕຼນິກສື່ສານຮັບໃຊ້ຫ້ອງການຍັງຂາດເຂີນເຊັ່ນ: ຄອມພິວເຕີ, ປິ້ນເຕີ...<br>• ບໍ່ມີຕູ້ໃສເອກະສານພຽງພໍ | **ໂຄງການເອດ**<br>• ບໍ່ມີ<br><br>**ໂຄງການໄຂ້ຍຸງ**<br>• ບໍ່ມີບັນຫາເພາະບໍ່ມີການຈັດຊື້<br><br>**ໂຄງການອັນນະໂລກ**<br>• ບໍ່ມີການຈັດຊື້ |

| | | | |
|---|---|---|---|
| | **ໂຄງການວັນນະໂລກ**<br>• ອຸປະກອນໄດ້ຊ້າ ແລະ ບາງເມືອງກໍ່ຫຍຸ້ງຍາກໃນການນຳສິ່ງອຸປະກອນໄປໃຫ້ | | |
| **ຂໍ້ແນະນຳ** | **ໂຄງການເອດ**<br>• ສະເໜີໃຫ້ທາງສູນກາງພິຈາລະນາການຈັດສັນຖົງຢາງໃຫ້ພຽງພໍ<br><br>**ໂຄງການໄຂ້ຍຸງ**<br>• ເຖິງຢ່າງໃດກໍ່ຕາມ ໃນການຈັດຊື້ ແມ່ນສະເໜີໃຫ້ປະຕິບັດຕາມລະບຽບການ<br>• ສະເໜີໃຫ້ສູນຕິດຕາມຈຳນວນມຸ້ງທີ່ຍັງບໍ່ທັນໄດ້ຮັບ ເພື່ອຈັດສົ່ງໃຫ້ຄົບຖ້ວນ<br><br>**ໂຄງການວັນນະໂລກ**<br>• ໃຫ້ສູນກາງຕິດຕາມເມືອງທີ່ພົບບັນຫາຫຍຸ້ງຍາກ ໂດຍປະສານງານກັບຂັ້ນແຂວງ | **ໂຄງການເອດ**<br>• ບໍ່ມີ<br><br>**ໂຄງການໄຂ້ຍຸງ**<br>• ບໍ່ມີ<br><br>**ໂຄງການວັນນະໂລກ**<br>• ບໍ່ມີ | **ໂຄງການເອດ**<br>• ບໍ່ມີ<br><br>**ໂຄງການໄຂ້ຍຸງ**<br>• ບໍ່ມີ<br><br>**ໂຄງການວັນນະໂລກ**<br>• ບໍ່ມີ |

| **3. ການຈັດຕັ້ງປະຕິບັດ** | | | |
|---|---|---|---|
| **ສິ່ງທີ່ພົບເຫັນ** | **ຂັ້ນແຂວງ** | **ຂັ້ນເມືອງ** | **ຂັ້ນສຸກສາລາ** |
| **ຄວາມຄືບໜ້າ** | **ໂຄງການເອດ**<br>• ລົງຕິດຕາມຊຸກຍູ້ຂັ້ນເມືອງ 01 ຄັ້ງ, 6 ຕົວເມືອງຄື: ປາກຊັນ,ບໍລິຄັນ, ທ່າພະບາດ, ປາກະດິງ, ຄຳເກີດ, ວຽງທອງ<br>• ກອງປະຊຸມປະຈຳໄຕມາດຮ່ວມກັບເພື່ອນຮ່ວມງານຢູ່ຂັ້ນແຂວງ<br>• ຝຶກອົບຮົມໃຫ້ອາສາສະມັກOW.MSM<br>• ລົງຕິດຕາມກິດຈະກຳຂອງ OW.MSM<br>• ຝຶກອົບຮົມໃຫ້ MSM ຈຳນວນ 17 ຄົນ<br>• ລົງໃຫ້ຄວາມຮູ້ ແລະ ຈ່າຍເງິນຈູງໃຈໃຫ້ແກ່ ຊພຊ ຈຳນວນ 17 ຄົນ ໃນ 6 ຕົວເມືອງຄື: ປາກຊັນ, ປາກະດິງ,ທ່າພະບາດ, ບໍ ລິຄັນ, ຄຳເກີດ ແລະ ວຽງທອງ.<br>• ລົງຕິດຕາມວຽກງານພາກສະໜາມຂອງຜູ້ປະສານງານກອງເລຂາໃນການຕິດຕາມກິດຈະກຳ MSM<br>• ລົງຢ້ຽມຢາມບ້ານຜູ້ຕິດເຊື້ອ ຈຳນວນ 11 ຄອບຄົວ ໃນ 03 ຕົວເມືອງຄື: ປາກຊັນ, ປາກະດິງ,ທ່າພະບາດ<br>• ລວມກຸ່ມຜູ້ຕິດເຊື້ອ<br>• ລົງຕິດຕາມຄົນເຈັບຂາດຢາໃນ 03 ຕົວເມືອງຄື: ປາກຊັນ, ປາກະດິງ, ທ່າພະບາດ<br>• ພາຍໃຕ້ການນຳພາຂອງຄະນະພັກຂັ້ນເທິງເປັນຜູ້ຊີ້ທິດເຍື່ອງທາງແລະເອົາໃຈໃສ່ໃນ | **ໂຄງການເອດ**<br>• ພາຍໄຕ້ການນຳພາຂອງຄະນະພັກຂັ້ນເທິງ, ເປັນຜູ້ຊີ້ທິດເຍື່ອງທາງແລະເອົາໃຈໃສ່ໃນການຈັດຕັ້ງປະຕິບັດວຽກງານໃຫ້ໄດ້ຮັບຜົນດີ<br>• ອຳນາດການປົກຄອງທ້ອງຖິ່ນໄດ້ໃຫ້ຄວາມຮ່ວມໄມ້ຮ່ວມມືເປັນຢ່າງດີ.<br>• ພະນັກງານທີ່ຮັບຜິດຊອບວຽກງານຕ້ານເອດ/ພຕພ ແມ່ນເຮັດໜ້າທີ່ຕາມພາລະບົດບາດທີ່ຂັ້ນເທິງໄດ້ມອບໝາຍໃຫ້ປະຕິບັດໄດ້ສຳເລັດ. ເຊັ່ນການລາຍງານຂໍ້ມູນປະຈຳເດືອນໄດ້ເປັນປົກະຕິ.<br>• ລົງສຳຫຼວດຈຳນວນບ້ານພັກ, ໂຮງແຮມ, ຮ້ານອາຫານ, ຮ້ານກິນດື່ມ ຄາຣາໂອເກະ ແລະ ສາວບໍລິການທົ່ວເມືອງປາກກະດິງ.<br>• ລົງສຸຂະສຶກສາໃຫ້ຄວາມຮູ້ພື້ນຖານກ່ຽວກັບພະຍາດເອດ ແລະ ພຕພ ຕາມບ້ານ.<br>• ລົງສຸຂະສຶກສາໃຫ້ຄວາມຮູ້ພື້ນຖານກ່ຽວກັບພະຍາດເອດ ແລະ ພຕພ ຮ່ວມກັບ ກອງເລຂາເອດແຂວງ<br>• ແມ່ມານທີ່ໄດ້ມາຮັບບໍລິການ ໄດ້ | **ໂຄງການໄຂ້ຍຸງ**<br>• ກິດຈະກຳທີ່ປະຕິບັດເພື່ອຄວບຄຸມພະຍາດໄຂ້ຍຸງສຸກສາລາລົງເກັບກຳຂໍ້ມູນຂັ້ນບ້ານ 4 ຄັ້ງ.<br>• ກິດຈະກຳທີ່ປະຕິບັດເພື່ອຄວບຄຸມພະຍາດໄຂ້ເລືອດອອກ ສຸກສາລາໄດ້ເຄື່ອນໄຫວສຸຂະສຶກສາຮ່ວມກັບເມືອງ ທີ່ບ້ານເປົ້າໝາຍ 1 ຄັ້ງ.<br>• ຄົນເຈັບມາຮັບບໍລິການເປັນປົກກະຕິ<br>• ມີຫຼາຍສຸກສາລາທີ່ສາມາດປະຕິບັດໄດ້ດີ<br>• ມີການເຊື່ອມສານ ແລະ ພົວພັນກັບເມືອງໃນການປະຕິບັດແຕ່ລະກິດຈະກຳ |

| | | | |
|---|---|---|---|
| | ການຈັດຕັ້ງປະຕິບັດວຽກງານໃຫ້ໄດ້ຮັບຜົນດີ.<br>• ທີມງານ/ຄູ່ຮ່ວມງານແຕ່ລະຂັ້ນໄດ້ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດ.<br>• ມີງົບປະມານໃນການຈັດຕັ້ງປະຕິບັດວຽກງານ (ໄດ້ຮັບການສະໜັບສະໜູນຈາກອົງການຈັດຕັ້ງລັດຖະບານ ແລະ ສາກົນ)<br>• ພະນັກງານທີ່ຮັບຜິດຊອບວຽກງານຕ້ານເອດ/ພຕພແຕ່ລະເມືອງແມ່ນເຮັດໜ້າທີຕາມພາລະບົດບາດທີ່ຂັ້ນເທິງໄດ້ມອບໝາຍໃຫ້ຈົນສຳເລັດເຊັ່ນໃນການລາຍງານຂໍ້ມູນປະຈຳເດືອນໄດ້ເປັນປົກກະຕິ.<br>• ອຳນາດການປົກຄອງທ້ອງຖິ່ນໄດ້ໃຫ້ຄວາມຮ່ວມມືເປັນຢ່າງດີ.<br><br>**ໂຄງການໄຂ້ຍຸງ**<br>• ການລົງຕິດຕາມຊີ້ນຳໄດ້ແບ່ງເຮັດເປັນທີມເພື່ອຕອບສະໜອງສະພາບການລາຍງານ<br>• ທຸກການປະຕິບັດໄດ້ຮັບການຊີ້ນຳໆພາຂອງການນຳ-ການຈັດຕັ້ງທຸກຂັ້ນ<br>• ສະພາບໄຂ້ຍຸງໂດຍທົ່ວໄປແມ່ນຕ່ຳຍົກເວັ້ນໃນບາງເມືອງ ແລະ ເຂດຫ່າງໄກສອກຫຼີກ<br>• ໄດ້ມີການຈັດສົ່ງມຸ້ງໄປໃຫ້ແຕ່ລະເມືອງ<br>• ໄດ້ມີການແຈກຢາຍມຸ້ງໂດຍອີງໃສ່ຕາມເງື່ອນໄຂຄົນເຈັບຕິດເຊື້ອ<br>• ຢາປິ່ນປົວມີພຽງພໍໃນການປິ່ນປົວ<br><br>**ໂຄງການວັນນະໂລກ**<br>• ມີການປະຕິບັດກິດຈະກຳໂຄງການໄດ້ດີ<br>• ສາມາດປິ່ນປົວຄົນເຈັບທີ່ເປັນວັນນະໂລກ<br>• ມີເຄື່ອງ Gen-Xpert ສາມາດຊ່ວຍໃນການບົ່ງມະຕິວັນນະໂລກໄດ້<br>• ໂດຍລວມໄດ້ຈັດຕັ້ງປະຕິບັດບັນດາກິດຈະກຳໄປຕາມແຜນທີ່ວາງໄວ້<br>• ການສົ່ງບົດລາຍງານໄດ້ສົ່ງຕາມປົກກະຕິ<br>• ໂດຍສ່ວນໃຫຍ່ບັນດາກິດຈະກຳບັນລຸຕົວເລກຄາດໝາຍ<br>• ຮັບປະກັນໄດ້ວ່າບໍ່ມີຢາປົວພະຍາດຂາດສາງ | ກວດຊອກຫາ HIV<br><br>**ໂຄງການໄຂ້ຍຸງ**<br>• ກິດຈະກຳທີ່ປະຕິບັດເພື່ອຄວບຄຸມພະຍາດໄຂ້ຍຸງເມືອງລົງຕິດ ຕາມສຸກສາລາ-ບ້ານເປົ້າໝາຍ 4 ຄັ້ງ.<br>• ລົງສົ່ງມຸ້ງເຄືອບຢາໃໝ່ໃຫ້ສຸກສາລາ-ບ້ານ 1 ຄັ້ງ<br>• ກິດຈະກຳທີ່ປະຕິບັດເພື່ອຄວບຄຸມພະຍາດໄຂ້ເລືອດອອກເມືອງ ແລະ ສຸກສາລາໄດ້ເຄື່ອນໄຫວສຸຂະສຶກສາທີ່ບ້ານເປົ້າໝາຍ 1 ຄັ້ງ.<br>• ກອງປະຊຸມ ຄຮມ ແລະ ຄຮບ ຕ້ານໄຂ້ເລືອດອອກ1 ຄັ້ງ<br>• ລະບົບເຝົ້າລະວັງພະຍາດໄຂ້ຍຸງຢູ່ເມືອງປາກກະດິງມີຄວາມເຂັ້ມແຂງຂຶ້ນ.<br>• ສາມາດເກັບກຳໄດ້ຂໍ້ມູນຈາກບ້ານເປົ້າໝາຍໄດ້ຄົບຖ້ວນ ແລະ ທັນເວລາ.<br>• ຮູ້ໄດ້ໄວສະພາບການເຈັບເປັນຍ້ອນໄຂ້ຍຸງທີ່ເກີດຂຶ້ນ.<br>• ເອົາໃຈໃສ່ຕິດຕາມສະພາບການເຈັບເປັນ,ການຕາຍຍ້ອນພະຍາດໄຂ້ຍຸງໃນແຕ່ລະເຂດທົ່ວເມືອງ.<br>• ເກັບກຳ, ສັງລວມຂໍ້ມູນ ແລະ ລາຍງານແຕ່ລະເດືອນໃຫ້ສະຖານີໄຂ້ຍຸງແຂວງ.<br>• ອັດຕາຜູ້ເປັນພະຍາດໄຂ້ຍຸງແມ່ນລຸດລົງສະເລ່ຍປະມານ 0,6/1.000<br>• ບໍ່ມີກໍລະນີການຕາຍຍ້ອນໄຂ້ຍຸງ<br>• ກໍລະນີເປັນພະຍາດໄຂ້ເລືອດອອກມີ 40 ກໍລະນີ.<br>• ການຕິດຕາມເຝົ້າລະວັງພະຍາດໄຂ້ເລືອດອອກແລະສຳຫຼວດໜອນນ້ຳສະເລ່ຍທົ່ວເມືອງ:<br>- ບ້ານເປົ້າໝາຍທີ່ສຳຫຼວດ 6 ບ້ານ 217 ຫຼັງຄາເຮືອນ<br>- ເປີເຊັນເຮືອນທີ່ພົບໜອນນ້ຳຍຸງລາຍ (HI)= 6,27 %<br>- ເປີເຊັນພາຊະນະທີ່ພົບໜອນນ້ຳຍຸງລາຍ (CI)=2,0 %<br>- ຄວາມໜາແໜ້ນຂອງໜອນນ້ຳຍຸງລາຍ (BI)=6,96 | **ໂຄງການວັນນະໂລກ**<br>• ໄດ້ມີການຊອກຄົ້ນຫາຄົນເຈັບ<br>• ໄດ້ເຜີຍແຜ່ເຮັດສຸຂະສຶກສາຕາມເຂດບ້ານຮ່ວມກັບ ອສບ ບ້ານ |

| | | | |
|---|---|---|---|
| | | **ໂຄງການອັນນະໂລກ**<br>• ສືບຕໍ່ປະຕິບັດກິດຈະກຳນຳສົ່ງຕົວຢ່າງໃຫ້ສຳເລັດ<br>• ໄດ້ຊອກຄົ້ນກໍລະນີຄົນເຈັບອັນນະໂລກຕາມບ້ານ<br>• ລົງຢ້ຽມຢາມຄົນເຈັບຕາມບ້ານ<br>• ລົງຕິດຕາມຊຸກຍູ້ສຸກສາລາ<br>• ໄດ້ກວດຄົນເຈັບໃນກໍລະນີສົງໄສແຕ່ລະມື້ | |
| **ຂໍ້ຫຍຸ້ງຍາກ** | **ໂຄງການເອດ**<br>• ການດຳເນີນວຽກງານຂອງ SW ທີ່ທາງ PEDA ຈັດຕັ້ງປະຕິບັດໃນ 03 ຕົວເມືອງຂອງແຂວງແມ່ນບໍ່ຕໍ່ເນື່ອງ, ການລົງຕິດຕາມ, ກອງປະຊຸມປະຈຳໄຕຣມາດທາງກອງເລຂາກໍ່ບໍ່ໄດ້ເຂົ້າຮ່ວມນຳ. ໄດ້ເຂົ້າຮ່ວມການຝຶກອົບຮົມໃຫ້ສາວບໍລິການ 1 ຄັ້ງ/1ປີເທົ່ານັ້ນ.<br>• ຍັງຂາດງົບປະມານເຮັດສຸຂະສຶກສາໃຫ້ທົ່ວເຖິງ<br>• ບໍ່ສາມາດຈັດຕັ້ງປະຕິບັດວຽກງານສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ-ພຕພໄດ້ຄົບຖ້ວນຍ້ອນວ່າບໍ່ມີງົບປະມານຕອບສະໜອງໃຫ້ແລະບໍ່ສາມາດລົງໂຄສະນາສຸຂະສຶກສາໃຫ້ປະຊາຊົນເຂົ້າໃຈ, ກິດຈະກຳປ້ອງກັນກໍມີຈຳກັດເຮັດໃຫ້ການຄວບຄຸມເອດ-ພຕພ ບໍ່ໄດ້ດີເທົ່າທີ່ຄວນ.<br>• ການກວດເລືອດແບບສະມັກໃຈຍັງມີບາງບ່ອນເຮັດບໍ່ທັນໄດ້ດີ ເພາະວ່າຂອດການປະສານງານພະນັກງານຮັບຜິດຊອບວຽກເອດ, ແມ່ແລະເດັກ ແລະ ອັນນະໂລກຍັງບໍ່ທັນມີການເຊື່ອມສານກັນດີປານໃດ.<br>• ພະນັກງານທີຮັບຜິດຊອບວຽກງານຕ້ານເອກ/ພຕພຂັ້ນແຂວງ, ຂັ້ນເມືອງຍັງບໍ່ທັນມີປະສົບການເພາະວ່າມີການຊັບປ່ຽນຄົນໃໝ່ມາຮັບຜິດຊອບບໍ່ໄດ້ຜ່ານການຝຶກອົບຮົມເລີຍ.<br><br>**ໂຄງການໄຂ້ຍຸງ**<br>• ພາຫະນະລົງຕິດຕາມບໍ່ພຽງພໍ<br>• ການປະສານງານລະຫວ່າງສູນກາງ-ແຂວງໃນບາງດ້ານຍັງບໍ່ທັນມີຄວາມລະອຽດ ເຊັ່ນ: ການສົ່ງຂ່າວກັບຄືນສິ່ງທີ່ປະຕິບັດບໍ່ | **ໂຄງການເອດ**<br>• ພະນັກງານທີ່ຮັບຜິດຊອບວຽກງານຕ້ານເອດ/ພຕພຂັ້ນເມືອງຂາດປະສົບການດ້ານວິຊາການຕ່າງໆເພາະວ່າມີການຊັບປ່ຽນຄົນໃໝ່ມາປະຕິບັດວຽກເອດ/ພຕພໂດຍບໍ່ໄດ້ຜ່ານການອົບຮົມເລີຍ.<br>• ພະນັກງານຮັບຜິດຊອບວຽກງານຕ້ານເອດໃນແຕ່ລະສຸກສາລາຍັງຂາດປະສົບການທາງດ້ານວິຊາການ ເພາະບໍ່ໄດ້ຜ່ານການອົບຮົມວຽກງານຕ້ານເອດ/ພຕພ.<br>• ການລາຍງານບາງສຸກສາລາແມ່ນຍັງຊັກຊ້າ.<br>• ອຸປະກອນຮັບໃຊ້ເຂົ້າໃນວຽກບໍ່ມີ ເຊັ່ນ: ສື່ເອເລັກໂຕຣນິກຄົບຊຸດ (ເຄື່ອງສຽງ, ເຄື່ອງສາຍ...)<br>• ຂາດງົບປະມານເຮັດສຸຂະສຶກສາ<br><br>**ໂຄງການໄຂ້ຍຸງ**<br>• ຜູ້ດຽວເຮັດວຽກຫຼາຍໜ້າທີ່ແລະມີການຍົກຍ້າຍໜ້າທີ່ໄປເຮັດບ່ອນໃໝ່<br>• ອຸປະກອນ ແລະ ພາຫະນະມີຈຳກັດ ແລະ ບາງບ່ອນແມ່ນບໍ່ມີ<br>• ປະຊາຊົນບາງເຂດຍັງບໍ່ໃຫ້ຄວາມຮ່ວມມືເທົ່າທີ່ຄວນ<br>• ຄົນເຈັບສ່ວນຫຼາຍບໍ່ແມ່ນຄົນເຈັບພາຍໃນແຂວງ ສະນັ້ນການຊອກຄົ້ນຄົນເຈັບແມ່ນມີບັນຫາຫຍຸ້ງຍາກ<br><br>**ໂຄງການອັນນະໂລກ**<br>• ຜູ້ຮັບຜິດຊອບຂະແໜງອັນນະໂລກມີຄົນດຽວ ຫຍຸ້ງຍາກເວລາບໍ່ຢູ່ ບໍ່ມີຜູ້ລາຍງານ ແລະ ຕໍ່ຢາໃຫ້ຄົນເຈັບ | **ໂຄງການເອດ**<br>• ພະນັກງານຂັ້ນສຸກສາລາບາງແຫ່ງມັກມີການຊັບປ່ຽນຜູ້ຮັບຜິດຊອບເລື້ອຍບໍ່ເຂົ້າໃຈຕໍ່ວຽກງານເຮັດໃຫ້ການເກັບກຳຂໍ້ມູນຊັກຊ້າແລະລາຍງານບໍ່ທັນເວລາໃນບາງຄັ້ງ.<br>• ອສບ ບາງບ້ານບໍ່ມັກຢູ່ບ້ານເຮັດໃຫ້ການເກັບກຳຂໍ້ມູນບາງເດືອນບໍ່ໄດ້ຄົບຖ້ວນ.<br>• ມີງົບປະມານໜ້ອຍບໍ່ສາມາດເຄື່ອນໄຫວ<br>• ບໍ່ໄດ້ຮັບຖົງຢາງອະນາໄມຈາກໂຄງການ<br>• ພະນັກງານຮັບຜິດຊອບວຽກງານຕ້ານເອດໃນແຕ່ລະສຸກສາລາຍັງຂາດປະສົບການທາງດ້ານວິຊາການເພາະບໍ່ໄດ້ຜ່ານການອົບຮົມວຽກງານຕ້ານເອດ/ພຕພ.<br><br>**ໂຄງການໄຂ້ຍຸງ**<br>• ພະນັກງານໃໝ່ຫຼາຍທ່ານຍັງບໍ່ທັນເຂົ້າໃຈແລະຮັບຮູ້ວຽກງານໄຂ້ຍຸງ<br>• ອຸປະກອນ-ພາຫະນະບໍ່ພຽງພໍ |

| | | | |
|---|---|---|---|
| | ທັນໄດ້ແມ່ນຍັງຊັກຊ້າ<br>• ການປະຕິບັດກິດຈະກຳແມ່ນຍັງຊັກຊ້າໃນກໍລະນີທີ່ມີການປະຕິບັດໝົດທຸກເມືອງພ້ອມກັນ ຍ້ອນອຸປະກອນ ແລະ ພາຫະນະບໍ່ພຽງພໍ<br>• ການລົງຕິດຕາມຄອບຄົວຄົນເຈັບແມ່ນຫຍຸ້ງຍາກເພາະຄົນເຈັບຍ້າຍມາແຕ່ເຂດອື່ນ ບໍ່ແມ່ນຄົນເຈັບພາຍໃນແຂວງ<br><br>**ໂຄງການວັນນະໂລກ**<br>• ການຊອກຄົ້ນກໍລະນີສົງໄສຍັງຕໍ່າ (ພະນັກງານສຸກສາລານໍາສິ່ງຕົວຢ່າງຍັງຕໍ່າ, DTM ບາງເມືອງມີຫຼາຍໜ້າທີ່, ລໍຖ້າຄົນເຈັບມາໂຮງໝໍເອງ)<br>• ການເຮັດ DOT ຂັ້ນສູກສາລາແລະເມືອງຍັງບໍ່ທັນໄດ້ດີ (ບັນຫາໃນການດື້ຢາ)<br>• ຂັ້ນແຂວງລົງວຽກ, ມີບາງເມືອງບໍ່ເອົາໃຈໃສ່, ບອກແລ້ວບໍ່ເຮັດຕາມຄໍາແນະນໍາ ຫລື ໄປເຮັດວຽກອື່ນໆວ່າໂຕເອງມີວຽກຫຼາຍ<br>• ການຕິດຕາມທ້າຍເດືອນເຊັ່ນ: ທ້າຍເດືອນທີ່ 2, 3, 5, 6 ແລະ 8 ຍັງບໍ່ທັນໄດ້ເຕັມສ່ວນທີ່ກໍານົດໄວ້.<br>• ເວລາເມືອງລົງຕິດຕາມສຸກສາລາ, ການແນະນໍາຍັງບໍ່ເຕັມສ່ວນຕາມໜ້າທີ່ຂອງຕົນຮັບຜິດຊອບ ເຊັ່ນ: ການໝາຍບັດກິນຢາຂອງຄົນເຈັບ ຫລື ປື້ມຂຶ້ນທະບຽນຂອງຄົນເຈັບ ຫລື ຄົນເຈັບປິ່ນປົວຫຼາຍດີ, ຈົບກໍານົດ, ຕາຍ ຍັງບໍ່ທັນເອົາບັດມາໄວ້ຢູ່ເມືອງເພື່ອລຽງເລກລໍາດັບຕາມປື້ມຂຶ້ນທະບຽນຂອງຄົນເຈັບ ແຕ່ລະປີ.<br>• ເວລາລົງປຽມບ້ານການກັ່ນຕອງຊອກຫາຄົນເຈັບທີ່ສົງໃສເປັນວັນນະໂລກຍັງຕໍ່າ. | • ເວລາມີຄົນເຈັບເປັນວັນນະໂລກມານອນໂຮງໝໍ ແລະ ການຊອກຄົ້ນກໍລະນີສົງໄສ ແມ່ນພົບບັນຫາຫຍຸ້ງຍາກຍ້ອນວ່າໜ່ວຍງານວັນນະໂລກແມ່ນຢູ່ຫ້ອງການສາທາລະນະສຸກເມືອງ ຊຶ່ງບໍ່ໄດ້ສັງກັດຢູ່ໂຮງໝໍ ສະນັ້ນຫຍຸ້ງ ຍາກໃນການພົວພັນວິເຄາະ ແລະ ການຕໍ່ຢາໃຫ້ຄົນເຈັບ<br>• ງົບປະມານຍັງຫຼ້າຊ້າ<br>• ພາຫະນະເປ່ເພ ບໍ່ສາມາດນໍາໃຊ້ໄດ້ | • ການແບ່ງວຽກງານກັນຍັງບໍ່ທັນລະອຽດ<br>• ປະຊາຊົນບາງເຂດຍັງບໍ່ໃຫ້ຄວາມຮ່ວມມືເທົ່າທີ່ຄວນ<br><br>**ໂຄງການວັນນະໂລກ**<br>• ຍັງຂາດການເຄື່ອນໄຫວວຽກງານສຸຂະສຶກສາ<br>• ການເຮັດ DOT ກັບຄົນ ເຈັບມີຄວາມຫຍຸ້ງຍາກ ອສບ ບໍ່ຢາກເຮັດວຽກເນື່ອງຈາກວ່າບໍ່ມີເງິນອຸດໜູນ ແລະ ຄົນເຈັບກໍ່ບໍ່ໃຫ້ຄວາມຮ່ວມມື<br>• ບໍ່ມີງົບປະມານສົ່ງຕົວຢ່າງ |
| **ຂໍ້ແນະນໍາ** | **ໂຄງການເອດ**<br>• ຄວນມີການຈັດອົບຮົມດ້ານການຄຸ້ມຄອງໂຄງການໃຫ້ທີມງານຂັ້ນແຂວງ ແລະ ຂັ້ນເມືອງ ຢ່າງຕໍ່ເນື່ອງ<br>• ສະໜອງງົບປະມານກິດຈະກໍາວຽກງານປ້ອງກັນເພື່ອການປົກຄຸມ ແລະ ຮັບປະກັນຄຸນະພາບໃນການປ້ອງກັນເຊື້ອເຮສໄອວີ. | **ໂຄງການເອດ**<br>• ຄືກັນກັບຂັ້ນແຂວງ<br><br>**ໂຄງການໄຂ້ຍຸງ**<br>• ຄວນສະໜອງອຸປະກອນ, ພາຫະນະໃຫ້ຕື່ມ<br>• ສະເໜີໃຫ້ພິຈາລະນາໜ້າທີ່ຮັບຜິດຊອບຂອງພະນັກງານແຕ່ລະຂັ້ນ ແລະ ປັບປຸງລະບົບວິທີການເຮັດວຽກ | **ໂຄງການເອດ**<br>• ຄືກັນກັບຂັ້ນແຂວງ<br><br>**ໂຄງການໄຂ້ຍຸງ**<br>• ຄືກັນກັບຂັ້ນເມືອງ<br>• ສະເໜີໃຫ້ພິຈາລະນາໜ້າທີ່ຮັບຜິດຊອບຂອງພະນັກງານແຕ່ລະຂັ້ນ ແລະ ປັບປຸງລະບົບວິທີການເຮັດ |

| | | | |
|---|---|---|---|
| | **ໂຄງການໄຂ້ຍຸງ**<br>• ຄວນສະໜອງອຸປະກອນຮັບໃຊ້ໃໝ່ໃຫ້ໃນກໍລະນີເຄື່ອງເກົ່າແກ່ເຊັ່ນ: ຄອມພິວເຕີ ແລະເຄື່ອງພິມ<br>• ຄວນສະໜອງພາຫະນະໃໝ່ເພີ່ມເພື່ອເຄື່ອນໄຫວວຽກງານໃຫ້ໄວຂຶ້ນ<br>• ໃຫ້ທາງສູນລົງຕິດຕາມໂຄສະນາເຜີຍແຜ່ໃນເຂດທີ່ມີການຕິດເຊື້ອ ໃຫ້ເຂົ້າໃຈຕື່ມ<br>• ເວລາທີມງານຄະນະກຳມະການກອດກາກອງທຶນໂລກລົງຊຸກຍູ້ຕິດຕາມວຽກງານ ສະເໜີໃຫ້ກະກຽມບົດລາຍງານໃຫ້ລະອຽດເພື່ອແຈກຢາຍໃຫ້ທີມງານໄດ້ອ່ານໃນເວລາປະຊຸມ<br><br>**ໂຄງການວັນນະໂລກ**<br>• ໃຫ້ທາງສູນກາງ ແລະ ຂັ້ນແຂວງໄດ້ມີການອົບຮົມພະນັກງານທີ່ໄດ້ຮັບໜ້າທີ່ໃໝ່<br>• ໂຄສະນາເຜີຍແຜ່ຕາມເຂດຊຸມຊົນຕື່ມ | • ສະເໜີໃຫ້ຜູ້ຮັບຜິດຊອບວຽກງານໄຂ້ຍຸງຂັ້ນແຂວງລົງຕິດຕາມໂຄສະນາເຜີຍແຜ່ໃນເຂດທີ່ມີການຕິດເຊື້ອໃຫ້ເຂົ້າໃຈຕື່ມ<br><br>**ໂຄງການວັນນະໂລກ**<br>• ຕ້ອງມີຜູ້ຮັບຜິດຊອບຂະແໜງວັນນະໂລກຢ່າງໜ້ອຍ 2 ຄົນ<br>• ຕ້ອງມີໜ່ວຍງານວັນນະໂລກປະຈໍາຢູ່ໂຮງໝໍ<br>• ສະເໜີມີການລົງຕິດຕາມຈາກຂັ້ນແຂວງຕື່ມ<br>• ໂຄສະນາເຜີຍແຜ່ຕາມເຂດຊຸມຊົນຕື່ມ | ວຽກ<br>• ສະເໜີໃຫ້ຜູ້ຮັບຜິດຊອບວຽກງານໄຂ້ຍຸງຂັ້ນເມືອງລົງຕິດຕາມ ສຸກສາລາ ແລະ ອສບ ຕື່ມ |

| **4. ການລາຍງານ** | | | |
|---|---|---|---|
| **ສິ່ງທີ່ພົບເຫັນ** | **ຂັ້ນແຂວງ** | **ຂັ້ນເມືອງ** | **ຂັ້ນສຸກສາລາ** |
| **ຄວາມຄືບໜ້າ** | **ໂຄງການເອດ**<br>• ການລາຍງານແມ່ນເປັນປົກກະຕິຕາມໄຕມາດ<br><br>**ໂຄງການໄຂ້ຍຸງ**<br>• ໂດຍລວມແລ້ວແຂວງແມ່ນປະຕິບັດການລາຍງານໃຫ້ສູນກາງໄດ້ດີ<br><br>**ໂຄງການວັນນະໂລກ**<br>• ໄດ້ລາຍງານທຸກໆໄຕມາດ ຕາມແຜນການແຕ່ລະຂັ້ນ ສຸກສາລາ-ເມືອງ-ແຂວງ-ສູນກາງ<br>• ການລາຍງານສະຖິຕິແມ່ນ 03 ເດືອນລາຍງານເທື່ອໜຶ່ງ<br>• ສຸກສາລາຫາເມືອງ ລາຍງານທຸກໆວັນທີ 3<br>• ເມືອງ ຫາແຂວງ ລາຍງານທຸກໆວັນທີ 5<br>• ແຂວງຫາສູນວັນນະໂລກ ລາຍງານ ທຸກໆວັນທີ 10 ຕົ້ນເດືອນຂອງໄຕມາດຕໍ່ມາ.<br>• ສໍາລັບດ້ານການເງິນໄດ້ລາຍງານທຸກໆເດືອນ, ການລາຍງານແມ່ນໃຊ້ແບບຟອມທີ່ທາງສູນໄດ້ກໍານົດໃຫ້. | **ໂຄງການເອດ**<br>• ມີການລາຍງານປົກກະຕິ 2 ບ້ານ: ນໍ້າເຖື່ອ ແລະ ຫ້ວຍເຜັດ ເຂົ້າຮ່ວມອົບຮົມແບບຟອມລາຍງານເອດ.<br>• ມີຕົວເລກການລາຍງານ VCT ຕາມແຕ່ລະໄຕມາດ<br><br>**ໂຄງການໄຂ້ຍຸງ**<br>• ສ່ວນໃຫຍ່ແມ່ນໄດ້ປະຕິບັດຕາມການຊີ້ນໍາຈາກແຂວງແລະໄດ້ຮັບຜົນສໍາເລັດທີ່ດີ<br>• ສາມາດເກັບກໍາບັນຫາໄຂ້ ຍຸງຂອງເມືອງຕົນເອງໄດ້ດີ<br><br>**ໂຄງການວັນນະໂລກ**<br>• ໄດ້ລາຍງານໃຫ້ແຂວງເປັນປົກກະຕິທຸກໆໄຕມາດ, ທຸກໆເດືອນ ແລະ ເວລາທີ່ພົບບັນຫາຫຍຸ້ງຍາກ<br>• ການລາຍງານບາງສຸກສາລາຍັງຊັກຊ້າ | **ໂຄງການໄຂ້ຍຸງ**<br>• ສຸກສາລາສ່ວນຫລາຍເຮັດລາຍງານໄດ້ດີ<br>• ສຸກສາລາສົ່ງລາຍງານຫາເມືອງ ທຸກວັນທີ 3 ແລະ ຂຶ້ນໄປລາຍງານ (ລວມປະຈໍາເດືອນ) ຢູ່ເມືອງທຸກວັນທີ 5<br><br>**ໂຄງການວັນນະໂລກ**<br>• ມີການລາຍງານປົກກະຕິແຕ່ ອສບ ບໍ່ຢາກເຮັດວຽກເປັນປົກກະຕິ |

| | | | |
|---|---|---|---|
| **ຂໍ້ຫຍຸ້ງຍາກ** | **ໂຄງການເອດ**<br>• ຍັງຂາດອຸປະກອນຮັບໃຊ້ເຊັ່ນ: ຄອມພິວເຕີຮັບໃຊ້ການລາຍງານ<br>• ການລາຍງານມີບາງເມືອງຍັງຊັກຊ້າ ແລະ ບໍ່ໄດ້ຄົບທຸກສຸກສາລາ, ການຄິດໄລ່ຕົວເລກຍັງມີການຜິດດ່ຽງ.<br>• ການລາຍງານກໍລະນີຄົນເຈັບ HIV-TB ຍັງບໍ່ທັນໄດ້ດີ ຍ້ອນວ່າຢາ ARV ບໍ່ມີ<br>• ຄົນເຈັບສົ່ງມາແຕ່ສູນກາງສ່ວນຫຼາຍ<br><br>**ໂຄງການໄຂ້ຍຸງ**<br>• ເວລາທີມງານຄະນະກຳມະການກວດກາກອງທຶນໂລກລົງຊຸກຍູ້ຕິດຕາມວຽກງານບໍ່ມີບົດລາຍ ຫຼື ບໍ່ມີເອກະສານລາຍງານໃຫ້ລະອຽດເພື່ອແຈກຢາຍໃຫ້ທີມງານໄດ້ອ່ານໃນເວລາປະຊຸມ<br>• ການລາຍງານຢູ່ຂັ້ນແຂວງບາງຄັ້ງຍັງຊັກຊ້າ ເພາະເມືອງສົ່ງບົດລາຍງານມາໃຫ້ບໍ່ໄດ້ຕາມກຳນົດເວລາ.<br>• ການສັງລວມຂໍ້ມູນຂອງເມືອງແມ່ນຍັງພົບບັນຫາຫຍຸ້ງຍາກ ແລະ ຊັກຊ້າ<br>• ພະນັກງານຜູ້ຮັບຜິດຊອບເຮັດບົດລາຍງານຂາດເງິນຈູງໃຈ<br>• ການລາຍງານແຜ່ນແກ້ວຍັງຊັກຊ້າ<br>• ການປະສານງານກັບຂັ້ນເມືອງຍັງບໍ່ທັນເຮັດໄດ້ດີ<br><br>**ໂຄງການວັນນະໂລກ**<br>• ພະນັກງານຍັງມີຈຳນວນຈຳກັດແລະຍັງບໍ່ມີງົບພຽງພໍໃນການລົງຊຸກຍູ້ຕິດຕາມເມືອງໄດ້ເປັນປົກກະຕິ | **ໂຄງການເອດ**<br>• ຍັງຂາດອຸປະກອນຮັບໃຊ້ເພື່ອເຄື່ອນໄຫວວຽກງານ<br>• ການລາຍງານຂໍ້ມູນຂອງບາງເມືອງຍັງບໍ່ໄດ້ດີ, ເກັບກຳຂໍ້ມູນຍັງບໍ່ຄົບຖ້ວນ ສາຍເຫດຍ້ອນຂາດອຸປະ ກອນແລະການຝຶກອົບຮົມ.<br>• ຄົນເຈັບມີໜ້ອຍແລະບາງຄົນເມືອງບໍ່ໄດ້ຮັບລາຍງານ<br><br>**ໂຄງການໄຂ້ຍຸງ**<br>• ການລາຍງານຂອງບາງເມືອງຍັງຊັກຊ້າຍ້ອນຢູ່ຫ່າງໄກສອກຫລີກ. ບາງເມືອງຍັງມີການລາຍງານບໍ່ຖືກຕ້ອງ, ບໍ່ຄົບຖ້ວນ<br>• ພະນັກງານບໍ່ໄດ້ຮັບການເຝິກອົບຮົມຢ່າງເປັນລະບົບກ່ຽວກັບແບບຟອມລາຍງານ<br><br>**ໂຄງການວັນນະໂລກ**<br>• ບໍ່ມີ | **ໂຄງການເອດ**<br>• ບໍ່ມີການເຄື່ອນໄຫວ<br>• ບໍ່ມີລາຍງານ<br><br>**ໂຄງການໄຂ້ຍຸງ**<br>• ພະນັກງານສຸກສາລາຍັງຂາດຄວາມເອົາໃຈໃສ່ຕໍ່ການເຮັດບົດລາຍງານ<br>• ແບບຟອມລາຍງານຂັ້ນສຸກສາລາແລະຂັ້ນບ້ານຍັງບໍ່ພຽງພໍ<br>• ບາງ ອສບ ທີ່ຢູ່ຫ່າງໄກແມ່ນບໍ່ມີການລາຍງານໃຫ້ສຸກສາລາເລີຍ<br><br>**ໂຄງການວັນນະໂລກ**<br>• ການເກັບສິ່ງຕົວຢ່າງຍັງບໍ່ທັນໄດ້ດີ |
| **ຂໍ້ແນະນຳ** | **ໂຄງການເອດ**<br>• ໃຫ້ທາງໂຄງການຕິດຕາມຂັ້ນແຂວງຕື່ມເລື່ອງການລາຍງານຂັ້ນເມືອງຫາແຂວງ, ແຂວງຫາສູນກາງ<br><br>**ໂຄງການໄຂ້ຍຸງ**<br>• ການລາຍງານຄວນເຮັດຜ່ານລະບົບເຝົ້າລະວັງພະຍາດ ແລະ ການລາຍງານຕາມສາຍຕັ້ງ ສາຍຂວາງ<br>• ສະເໜີໃຫ້ມີການອົບຮົມຂັ້ນເມືອງຕື່ມ<br>**ໂຄງການວັນນະໂລກ**<br>• ສະເໜີໃຫ້ສູນການລົງຕິດຕາມອົບຮົມວຽກງານຕື່ມເພື່ອເຮັດໃຫ້ການລາຍງານເປັນປົກກະຕິ ລາຍງານຖືກຕາມເປົ້າໝາຍ | **ໂຄງການເອດ**<br>• ຄວນສະໜອງຄອມພິວເຕີໃຫ້ທຸກໆເມືອງພ້ອມທັງອົບຮົມຄືນໃໝ່<br><br>**ໂຄງການໄຂ້ຍຸງ**<br>• ໃຫ້ຂັ້ນແຂວງລົງຕິດຕາມທຸກໆໄຕູມາດ<br><br>**ໂຄງການວັນນະໂລກ**<br>• ສະເໜີໃຫ້ແຂວງລົງຕິດຕາມອົບຮົມເພື່ອເຮັດໃຫ້ການລາຍງານເປັນປົກກະຕິ ແລະ ຄົບຖ້ວນ | **ໂຄງການເອດ**<br>• ຮັບປະກັນການສະໜອງແບບຟອມລາຍງານໃຫ້ສຸກສາລາ ແລະ ອສບ ໃຫ້ພຽງພໍ.<br><br>**ໂຄງການໄຂ້ຍຸງ**<br>• ໃຫ້ຂັ້ນເມືອງລົງຕິດຕາມບ້ານທີ່ຍັງມີບັນຫາການລາຍງານໃຫ້ສາມາດລາຍງານໄດ້ປົກກະຕິ |

## 5. ການຕີລາຄາປະເມີນຜົນລວມຂອງໂຄງການ

### 5.1. ຄວາມຄືບໜ້າ/ຜົນສຳເລັດ

**ໂຄງການເອດ**

- ພາຍໃຕ້ການຊີ້ນຳນຳພາຂອງຄະນະນຳຂັ້ນເທິງ ເຮັດໃຫ້ການຈັດຕັ້ງປະຕິບັດວຽກງານໃຫ້ໄດ້ຮັບຜົນດີ.
- ທີມງານ/ຄູ່ຮ່ວມງານແຕ່ລະຂັ້ນໄດ້ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດ.
- ມີງົບປະມານໃນການຈັດຕັ້ງປະຕິບັດວຽກງານ (ໄດ້ຮັບການສະໜັບສະໜູນຈາກອົງການຈັດຕັ້ງລັດຖະບານ ແລະ ສາກົນ)
- ພະນັກງານທີ່ຮັບຜິດຊອບ ວຽກງານຕ້ານເອດ/ພຕພ ແຕ່ລະເມືອງແມ່ນເຮັດໜ້າທີ ຕາມພາລະບົດບາດທີ່ຂັ້ນເທິງ ໄດ້ມອບໝາຍໃຫ້ ຈົນສຳເລັດເຊັ່ນ ໃນການລາຍງານຂໍ້ມູນປະຈຳເດືອນໄດ້ເປັນປົກກະຕິ.
- ອຳນາດການປົກຄອງທ້ອງຖິ່ນໄດ້ໃຫ້ຄວາມຮ່ວມມືເປັນຢ່າງດີ.
- ຄົນເຈັບໄດ້ເຂົ້າເຖິງການປິ່ນປົວ ARV ລຸດຜ່ອນອັດຕາການແຜ່ເຊື້ອ ແລະ ການຕາຍ
- ມີການເຄື່ອນໄຫວປະຕິບັດໜ້າທີ່ບັນລຸເປົ້າໝາຍ
- ການບົດຕາມເຮັດກິດຈະກຳຕ່າງໆເຊັ່ນ: ໂຄສະນາເຜີຍແຜ່ສຸຂະສຶກສາ ໄດ້ຂະຫຍາຍຕົວຢ່າງກ້ວາງຂວາງ

**ໂຄງການໄຂ້ຍຸງ**

- ໄດ້ຮັບການຊີ້ນຳໆພາຢ່າງໃກ້ສິດຈາກຂັ້ນເທິງທັງສາຍຕັ້ງ ແລະ ສາຍຂວາງ, ພ້ອມດ້ວຍອຳນາດການປົກຄອງແຕ່ລະຂັ້ນໄດ້ອຳນວຍ ຄວາມສະດວກ ແລະ ໃຫ້ການຮ່ວມມືເປັນຢ່າງດີ.
- ມີຕາໜ່າງຄວບຄູມໄຂ້ຍຸງທົ່ວເຖິງທຸກເຂດ, ທຸກບ້ານ ເປົ້າໝາຍ ແລະ ກໍ່ໄດ້ຮັບການຝຶກອົບຮົມຢ່າງຕໍ່ເນື່ອງ
- ໄດ້ຮັບການຊ່ວຍເຫຼືອດ້ານງົບປະມານ ແລະ ວັດຖຸອຸປະກອນຈາກໂຄງການກອງທຶນໂລກ, CDCII ແລະ ງົບປະມານລັດ.
- ເອົາໃຈໃສ່ ແລະ ມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ວຽກງານຂອງພະນັກງານວິຊາການແຕ່ລະຂັ້ນ, ຕະຫຼອດຮອດ ອສບ, ຄຮບ ໃນແຕ່ ລະບ້ານເປົ້າໝາຍ.
- ລະບົບເຝົ້າລະວັງພະຍາດໄຂ້ຍຸງຢູ່ໃນແຂວງກໍ່ຄືເມືອງປາກກະດີງມີຄວາມເຂັ້ມແຂງຂຶ້ນ.
- ສາມາດເກັບກຳໄດ້ຂໍ້ມູນຈາກບ້ານເປົ້າໝາຍໄດ້ຄົບຖ້ວນ ແລະ ທັນເວລາ.
- ຮູ້ໄດ້ໄວສະພາບການເຈັບເປັນຍ້ອນໄຂ້ຍຸງທີ່ເກີດຂຶ້ນ.

**ໂຄງການວັນນະໂລກ**

- ໂດຍລວມໄດ້ຈັດຕັ້ງປະຕິບັດບັນດາກິດຈະກຳໄປຕາມແຜນທີ່ວາງໄວ້
- ອັດຕາການຄົ້ນພົບຄົນເຈັບວັນນະໂລກໄດ້ເພີ່ມຂຶ້ນຫຼາຍກ່ວາເກົ່າ
- ໄດ້ມີການຮ່ວມມືກັບອົງການຈັດຕັ້ງອື່ນ ແລະ ຜູ້ຮ່ວມງານອື່ນໄດ້ມີສ່ວນຮ່ວມໃນການເຄື່ອນໄຫວວຽກງານວັນນະໂລກ
- ໄດ້ສົ່ງບົດລາຍງານຕາມປົກກະຕິ
- ໂດຍສ່ວນໃຫຍ່ບັນດາກິດຈະກຳບັນລຸຕົວເລກຄາດໝາຍ
- ຮັບປະກັນໄດ້ວ່າບໍ່ມີຢາປົວພະຍາດຂາດສາງ

### 5.2. ຂໍ້ຫຍຸ້ງຍາກ

**ໂຄງການເອດ**

- ພະນັກງານທີ່ຮັບຜິດຊອບວຽກງານຕ້ານເອດ/ພຕພ ຂັ້ນແຂວງ, ຂັ້ນເມືອງ ຍັງບໍ່ທັນມີປະສົບການ ເພາະວ່າມີການຊັບປ່ຽນຄົນໃໝ່ມາ ຮັບຜິດຊອບໂດຍບໍ່ໄດ້ຜ່ານການຝຶກອົບຮົມເລີຍ.
- ກິດຈະກຳສາມາດຂະຫຍາຍຮອດແຕ່ຂັ້ນເມືອງເທົ່ານັ້ນ, ຍັງບໍ່ທັນໄດ້ຂະຫຍາຍຮອດຂັ້ນສຸກສາລາເທື່ອ
- ການລາຍງານມີບາງເມືອງຍັງຊັກຊ້າ ແລະ ບໍ່ໄດ້ຄົບທຸກສຸກສາລາ, ການຄິດໄລ່ຕົວເລກຍັງມີການຜິດດ່ຽງ.
- ການກວດເລືອດແບບສະມັກໃຈຍັງມີບາງບ່ອນເຮັດບໍ່ທັນໄດ້ດີ (ເພາະວ່າຂອດການປະສານງານພະນັກງານຮັບຜິດຊອບວຽກເອດ, ແມ່ແລະເດັກ ແລະ ວັນນະໂລກຍັງບໍ່ທັນມີການເຊື່ອມສານກັນດີປານໃດ).
- ການດຳເນີນວຽກງານຂອງ SW ທີ່ທາງ PEDA ຈັດຕັ້ງປະຕິບັດໃນ 03 ຕົວເມືອງຂອງແຂວງແມ່ນບໍ່ຕໍ່ເນື່ອງ, ການລົງຕິດຕາມ, ກອງປະຊຸມປະຈຳໄຕຣມາດທາງກອງເລຂາກໍ່ບໍ່ໄດ້ເຂົ້າຮ່ວມນຳ (ໄດ້ເຂົ້າຮ່ວມການຝຶກອົບຮົມໃຫ້ສາວບໍລິການ 1 ຄັ້ງ/1ປີ ເທົ່ານັ້ນ).
- ຍັງຂາດອຸປະກອນຮັບໃຊ້ເຂົ້າໃນວຽກງານເຊັ່ນ: ສື່ສານເອເລັກໂຕຣນິກຄົບຊຸດ (ເຄື່ອງສຽງ, ເຄື່ອງສາຍ…ເປັນຕົ້ນ)

| |
|---|
| • ງົບປະມານເຂົ້າໃນການເຄື່ອນໄຫວວຽກງານກໍ່ຍັງມີຈໍາກັດ.<br>• ຄົນເຈັບສ່ວນໃຫຍ່ແມ່ນບໍ່ໃຫ້ການຮ່ວມມື |
| **ໂຄງການໄຂ້ຍຸງ**<br>• ການອະນຸມັດງົບປະມານຊ້າ<br>• ອຸປະກອນຮັບໃຊ້ທີ່ຈໍາເປັນໃນການເຮັດວຽກບໍ່ພຽງພໍ (ເຊັ່ນ ຄອມພິວເຕີເກົ່າ)<br>• ພະນັກງານຂັ້ນສຸກສາລາບາງແຫ່ງມັກມີການຊັບປ່ຽນຜູ້ຮັບຜິດຊອບເລື້ອຍ ບໍ່ເຂົ້າໃຈຕໍ່ວຽກງານ ເຮັດໃຫ້ການເກັບກໍາຂໍ້ມູນຊັກຊ້າ ແລະ ລາຍງານໃຫ້ເມືອງບໍ່ທັນເວລາໃນບາງຄັ້ງ.<br>• ອສບ ບາງບ້ານບໍ່ມັກຢູ່ບ້ານ ເຮັດໃຫ້ການເກັບກໍາຂໍ້ມູນບາງເດືອນບໍ່ໄດ້ຄົບຖ້ວນ. |
| **ໂຄງການວັນນະໂລກ**<br>• ການຊອກຄົ້ນກໍລະນີສົງໃສຍັງຕໍ່າ (ພ/ງສຸກສາລານໍາສົ່ງຕົວຢ່າງຍັງຕໍ່າ, DTM ບາງເມືອງມີຫຼາຍໜ້າທີ່, ລໍຖ້າຄົນເຈັບມາໂຮງໝໍເອງ)<br>• ການເຮັດ DOT ຂັ້ນສຸກສາລາແລະເມືອງຍັງບໍ່ທັນໄດ້ດີ (ມີບັນຫາໃນການດື້ຢາ)<br>• ເວລາຂັ້ນແຂວງລົງວຽກ, ມີບາງເມືອງບໍ່ເອົາໃຈໃສ່, ບອກແລ້ວບໍ່ເຮັດຕາມຄໍາແນະນໍາ ຫລື ໄປເຮັດວຽກອື່ນໆ ອ່າໂຕມີວຽກຫຼາຍ<br>• ການຕິດຕາມທ້າຍເດືອນເຊັ່ນ: ທ້າຍເດືອນທີ 2, 3, 5, 6 ແລະ 8 ຍັງບໍ່ທັນໄດ້ເຕັມສ່ວນທີ່ກໍານົດໄວ້.<br>• ເວລາເມືອງລົງຕິດຕາມສຸກສາລາ, ການແນະນໍາຍັງບໍ່ເຕັມສ່ວນຕາມໜ້າທີ່ຂອງຕົນຮັບຜິດຊອບເຊັ່ນ: ການໝາຍບັດກິນຢາຂອງຄົນເຈັບ, ຫລື ປື້ມຂຶ້ນທະບຽນຂອງຄົນເຈັບ, ຫລື ຄົນເຈັບປິ່ນປົວຫາຍດີ, ຈົບກໍານົດ, ຕາຍ ຍັງບໍ່ທັນເອົາບັດມາໄວ້ຢູ່ເມືອງເພື່ອລຽງເລກລໍາດັບຕາມປື້ມຂຶ້ນທະບຽນຂອງຄົນເຈັບ ແຕ່ລະປີ.<br>• ເວລາລົງຢຽມບ້ານ ການກັ່ນຕອງຊອກຫາຄົນເຈັບທີ່ສົງໃສເປັນວັນນະໂລກຍັງຕໍ່າ. |
| **5.3. ວິທີການແກ້ໄຂ** |
| **ໂຄງການເອດ**<br>• ໜ່ວຍງານຕ້ານເອດ ແລະ ວັນນະໂລກ ຕ້ອງມີການປະສານສົບທົບກັນຢ່າງຕໍ່ເນື່ອງ ໃຫ້ກໍານົດງົບປະມານເຄື່ອນໄຫວໃຫ້ເມືອງ, ສຸກສາລາໂດຍສະເພາະເຂດຫ່າງໄກສອກຫຼີກ.<br>• ການວາງແຜນການໃນການຈັດຕັ້ງປະຕິບັດ ຄວນຈະແມ່ນຂັ້ນແຂວງເປັນຜູ້ວາງແຜນການ ຈຶ່ງຈະປົກຄຸມການຄວບຄຸມພະຍາດເອດ-ພຕພ ໄດ້ຢ່າງທົ່ວເຖິງ.<br>• ໃຫ້ສູນກາງລົງຊຸກຍູ້ຕິດຕາມວຽກງານຕື່ມ<br>• ໃຫ້ມີການເຜີຍແຜ່ ເຮັດສຸຂະສຶກສາ ຕາມເຂດສາທາລະນະສຸກ<br>• ໃຫ້ມີງົບປະມານສະເພາະຂອງພະຍາດ HIV |
| **ໂຄງການໄຂ້ຍຸງ**<br>• ຕ້ອງປະກອບພະນັກງານໃຫ້ພຽງພໍ ຫລື ກໍ່ຕ້ອງໄດ້ຄັດເລືອກພະນັກງານທີ່ມີຄວາມສາມາດເຮັດວຽກງານໄດ້ດີຂຶ້ນ<br>• ເຊື່ອມສານການເຮັດວຽກກັບບັນດາໂຄງການອື່ນໆ ເພື່ອສ້າງຄວາມເຂັ້ມແຂງໃນຂັ້ນເມືອງ<br>• ຈັດການອົບຮົມຄືນດ້ານການຄຸ້ມຄອງບໍລິຫານໂຄງການໃຫ້ພະນັກງານທຸກຂັ້ນ<br>• ອອກແຮງໂຄສະນາສຸຂະສຶກສາໃຫ້ປະຊາຊົນຢ່າງທົ່ວເຖິງ ໃຫ້ເຫັນໄດ້ຄວາມສໍາຄັນຂອງການນອນໃນມຸ້ງ ເພື່ອປ້ອງກັນພະຍາດໄຂ້ຍຸງ<br>• ເພີ່ມງົບປະມານໃນການລົງຊ່ວຍຕິດຕາມຊຸກຍູ້ຂັ້ນເມືອງ, ສຸກສາລາ ແລະ ບ້ານ<br>• ຄວນເອົາໃຈໃສ່ປັບປຸງລະບົບລາຍງານ, ໂດຍການເຮັດທົດລອງໃນຂັ້ນແຂວງ, ເມືອງ, ສຸກສາລາ ແລະ ລົງຮອດບ້ານ ເພື່ອກໍາໄດ້ບົດຮຽນຕົວຈິງ<br>• ຄວນຈັດສົ່ງຢາປິ່ນປົວບາງໝວດທີ່ເຫັນວ່າຂາດໃນຂັ້ນເມືອງແລະບ້ານ |
| **ໂຄງການວັນນະໂລກ**<br>• ເຮັດໃຫ້ໜ້າວຽກຂອງພະນັກງານຜູ້ຮັບຜິດຊອບໜ້ອຍລົງ ໃຫ້ລົງຫາສຸກສາລາ ແລະ ບ້ານທີ່ມີກໍລະນີສົງໃສໃຫ້ໄດ້ຕາມຕົວເລກຄາດຄະເນຂອງເຂດສຸກສາລາປົກຄຸມ<br>• ເວລາແຂວງ, ເມືອງລົງຕິດຕາມຊຸກຍູ້ ໃຫ້ເພີ່ມຄວາມຫ້າວຫັນ ແລະ ເຮັດວຽກຮ່ວມກັນເປັນຢ່າງດີ.<br>• ເວລາເມືອງລົງຕິດຕາມຂັ້ນສຸກສາລາຕ້ອງເບິ່ງຕາມພາລະໜ້າທີ່ຂອງຜູ້ຮັບຜິດຊອບຂັ້ນເມືອງ.<br>• ມອບໃຫ້ພະນັກງານສຸກສາລາ ແລະ ເມືອງ ທີ່ໃກ້ບ້ານຄົນເຈັບໄດ້ເຮັດ DOT ທຸກມື້ |

**ຂໍ້ຄວນເອົາໃຈໃສ່ເພີ່ມເຕີມ:**

- ເພີ່ມທະວີການຊອກຄົ້ນຫາຄົນເຈັບທີ່ເປັນພະຍາດວັນນະໂຣກໃຫ້ໄດ້ຫຼາຍກວ່າເກົ່າເພື່ອເຮັດໃຫ້ອັດຕາສ່ວນການຊອກຄົ້ນແຫ່ງຊາດເພີ່ມຂຶ້ນແລະບັນລຸຕົວເລກຄາດໝາຍ
- ອອກແຮງຊອກຄົ້ນກໍລະນີຄົນເຈັບວັນນະໂຣກໃນເດັກນ້ອຍ
- ອອກແຮງຊອກຄົ້ນກໍລະນີຄົນເຈັບນຳກຸ່ມທີ່ໃກ້ຊິດຕິດແທດກັບຄົນເຈັບວັນນະໂຣກ
- ຕິດຕາມການປິ່ນປົວໃຫ້ດີຂຶ້ນຕື່ມເພື່ອຮັບປະກັນປະສິດທິຜົນຂອງການປິ່ນປົວ, ຫຼຸດຜ່ອນການຕ້ານຕໍ່ຢາຂອງເຊື້ອພະຍາດ, ຫຼຸດຜ່ອນການຂາຍຕົວ ກໍຄືການຕາຍຂອງຄົນເຈັບ
- ເອົາໃຈໃສ່ວຽກງານໂຄສະນາສຸຂະສຶກສາ ເພື່ອໃຫ້ພໍ່ແມ່ປະຊາຊົນຮູ້ໄດ້ ແລະ ເຂົ້າໃຈ ອາການ, ເສັ້ນທາງຕິດຕໍ່ ແລະ ວິທີປ້ອງກັນພະຍາດ, ຖ້າມີອາການສົງໄສ ຫຼື ໃກ້ຊິດຕິດແທດກັບຄົນເຈັບເປັນພະຍາດວັນນະໂຣກ ໃຫ້ຮີບຮ້ອນໄປພົບແພດ ເພື່ອບົ່ງມະຕິ ແລ້ວປິ່ນປົວໃຫ້ຖືກຕ້ອງທັນເວລາ
- ຮັບປະກັນການສົ່ງບົດລາຍງານໃຫ້ທັນເວລາແລະຄົບຖ້ວນຕາມທີ່ໄດ້ກຳນົດໄວ້
- ເອົາໃຈໃສ່ການເກັບຮັກສາສຳເນົາເອກະສານການລາຍງານໃນແຕ່ລະຂັ້ນ
- ເອົາໃຈໃສ່ໃນການຮ່ວມມືກັບບັນດາອົງການຈັດຕັ້ງຫຼືຄູ່ຮ່ວມງານອື່ນທີ່ມີສ່ວນຮ່ວມໃນການເຄື່ອນໄຫວວຽກງານການຄວບຄຸມພະຍາດວັນນະໂຣກ.

**ສັງລວມບັນດາກິດຈະກຳຫຼັກທີ່ຕ້ອງໄດ້ຈັດຕັ້ງປະຕິບັດ:**

- ສົ່ງຕົວຢ່າງກໍລະນີສົງໄສ, ຕິດຕາມການປິ່ນປົວ
- ລົງຢ້ຽມຢາມຄົນເຈັບວັນນະໂຣກຕາມບ້ານ
- ອົບຮົມ ຫຼື ອົບຮົມຄືນໃຫ້ພະນັກງານສຸກສາລາ ກ່ຽວກັບການນຳໃຊ້ DOT
- ອົບຮົມຄືນໃຫ້ ອສບ ກ່ຽວກັບການນຳໃຊ້ DOT ຢູ່ຊຸມຊົນ
- ເຜີຍແຜ່ສຸຂະສຶກສາກ່ຽວກັບພະຍາດວັນນະໂຣກ ຜ່ານສື່ວິທະຍຸ-ໂທລະພາບ
- ລົງຕິດຕາມຊຸກຍູ້ຈາກແຂວງຫາເມືອງ ຫຼື ສຸກສາລາ
- ລົງຕິດຕາມຊຸກຍູ້ຈາກເມືອງຫາສຸກສາລາ-ບ້ານ
- ງົບບໍລິຫານຫ້ອງການ

## 6. ແຜນການຕໍ່ໜ້າປີ 2015-2016

**ໂຄງການເອດ**

❖ **ຂັ້ນແຂວງ**

- ສືບຕໍ່ປຸກລະດົມໃຫ້ຂັ້ນເມືອງລາຍງານຂໍ້ມູນເປັນປົກກະຕິໃຫ້ໄດ້ ພຕພ ຄົບທຸກສຸກສາລາແຕ່ລະເມືອງ.
- ສູ້ຊົນຂະຫຍາຍຈຸດກວດ VCT ໃຫ້ໄດ້ອີກ 01 ແຫ່ງຄື ເມືອງໄຊຈຳພອນ.
- ສືບຕໍ່ຂຶ້ນແຜນຂໍງົບປະມານລັດຖະບານເພື່ອຈັດຕັ້ງປະຕິບັດເຄື່ອນໄຫວວຽກງານຕ້ານເອດ/ພຕພ ໃນ 07 ຕົວເມືອງ ສົກປີ 2015-2016.
- ສືບຕໍ່ຂຶ້ນແຜນຂໍງົບປະມານຈາກໂຄງການສາກົນ ສົກປີ 2016-2017
- ສົ່ງເສີມການເຂົ້າເຖິງການບໍລິການໃຫ້ຄຳປຶກສາແນະນຳກວດເລືອດແບບສະມັກໃຈ ແລະ ກວດພະຍາດຕິດຕໍ່ທາງເພດສຳພັນ ໂດຍການໃຫ້ຂໍ້ມູນຂ່າວສານ ການໂຄສະນາໃນຮູບແບບຕ່າງໆ ແລະ ສົ່ງເສີມການນຳໃຊ້ຖົງຢາງອະນາໄມ.
- ສ້າງຄວາມເຂັ້ມແຂງ ໃຫ້ແກ່ທີມງານຈັດຕັ້ງປະຕິບັດແຕ່ລະຂັ້ນ ແລະ ເພີ່ມທະວີການມີສ່ວນຮ່ວມຂອງຊຸມຊົນ ແລະ ຜູ້ຕິດເຊື້ອ.
- ສົ່ງເສີມໃຫ້ຜູ້ຕິດເຊື້ອໄດ້ເຂົ້າເຖິງການຮັບຄຳປຶກສາແນະນຳ ແລະ ປິ່ນປົວດ້ວຍຢາຕ້ານຈຸລະໂລກ (ARV), ປິ່ນປົວພະຍາດແຊກຊ້ອນ. ນອກນັ້ນຍັງສາມາດເຂົ້າເຖິງການດູແລເບິ່ງແຍງຢູ່ກັບເຮືອນ ແລະ ຊຸມຊົນ.
- ສືບຕໍ່ວຽກງານປ້ອງກັນເອດໃນ ຊພຊ 05 ຕົວເມືອງເປົ້າໝາຍ (ລວມ PE ມີ 17ຄົນ) ໃຫ້ເຂົ້າເຖິງກຸ່ມເປົ້າໝາຍໃຫ້ໄດ້ 272 ຄົນ.
- ລົງຕິດຕາມອາສາສະມັກຂອງ MSM 5 ເມືອງເປົ້າໝາຍ (ປາກຊັນ, ປາກກະດິງ, ບໍລິຄັນ, ທ່າພະບາດ ແລະ ຄຳເກີດ)
- ກອງປະຊຸມປະຈຳໄຕຣມາດຮ່ວມກັບຄູ່ຮ່ວມງານຂັ້ນແຂວງ ແລະ ເມືອງ

- ວຽກງານບໍລິຫານຕ່າງໆຂອງກອງເລຂາ ແລະ ຊພຊ
- ກິດຈະກໍາອົບຮົມຄືນໃຫ້ແກ່ອາສາສະມັກ MSM (17 ຄົນ)
- ລົງໃຫ້ຄວາມຮູ້ແກ່ Peer ຢູ່ພາກສະໜາມ (OW)
- ສືບຕໍ່ຮັກສາການຕິດເຊື້ອເຮສໄອວີໃນກຸ່ມປະຊາກອນທີ່ມີອາຍຸລະຫວ່າງ 15-49 ປີ ໃຫ້ຢູ່ໃນລະດັບຕໍ່າກວ່າ 1%.
- ຮັບປະກັນໃຫ້ອັດຕາການຕິດເຊື້ອເຮສໄອວີ ໃນກຸ່ມປະຊາກອນທີ່ສ່ຽງໃຫ້ຕໍ່າກວ່າ 5%.

❖ **ເມືອງປາກກະດິງ**

- ສືບຕໍ່ລາຍງານເອດ ແລະ ພຕພ ປົກກະຕິ ໃຫ້ສາທາແຂວງ.
- ສືບຕໍ່ສົ່ງເສີມການໃຫ້ຄໍາປຶກສາກວດເລືອດແບບສະມັກໃຈ.
- ໂຄສະນາສຸຂະສຶກສາເຄື່ອນທີ່ຄວາມຮູ້ພື້ນຖານ ເອດ/ພຕພ ຕາມຮ້ານບັນເທີງ, ບ້ານພັກ ແລະ ບ້ານ
- ອົບຮົມຄືນແບບຟອມລາຍງານໃຫ້ຄູ່ຮ່ວມງານສຸກສາລາ ແລະ ໂຮງໝໍເມືອງ 2 ຄົນ, ສຸກສາລາ 2 ຄົນ
- ເກັບກໍາຂໍ້ມູນບ້ານພັກໂຮງແຮມ, ໂຮງງານ, ຮ້ານອາຫານ.
- ກອງປະຊຸມຄະນະກໍາມະການຕ້ານເອດຂັ້ນເມືອງ.
- ກອງປະຊຸມຖອດຖອນບົດຮຽນຂັ້ນແຂວງ, ເມືອງ.

❖ **ເມືອງທ່າພະບາດ:**

- ສືບຕໍ່ປຸກລະດົມໃຫ້ຂັ້ນສຸກສາລາລາຍງານປົກກະຕິ (ພຕພ)
- ສືບຕໍ່ໃຫ້ປິ່ນປົວ ພຕພ ແລະ ກວດການສະຫຼູບລາຍງານສົ່ງໃຫ້ແຂວງ ຢ່າງເປັນປົກກະຕິ
- ສູ້ຊົນຂະຫຍາຍຈຸດ VCT ໃຫ້ໄດ້ອີກຄື: ສຸກສາລາ 5 ແຫ່ງທົ່ວເມືອງ
- ສືບຕໍ່ປະຕິບັດແຜນການງົບປະມານປີ 2015-2016 ຂອງໂຄງການສາກົນໃຫ້ສໍາເລັດ
- ສືບຕໍ່ປະຕິບັດແຜນການງົບປະມານປີ 2015-2016 ຂອງລັດຖະບານໃຫ້ສໍາເລັດ
- ເຂົ້າຮ່ວມກອງປະຊຸມປະຈໍາໄຕມາດຂັ້ນແຂວງ 4 ຄັ້ງຕໍ່ປີ
- ເຂົ້າຮ່ວມການຝຶກອົບຮົມທວນຄືນກ່ຽວກັບການປິ່ນປົວ ພຕພ, ການນໍາໃຊ້ແບບຟອມລາຍງານ 1 ຄັ້ງຕໍ່ປີ
- ອົບຮົມການໃຫ້ຄໍາປຶກສາ ແລະ ການກວດເລືອດຊອກຫາເຊື້ອ HIV ໃຫ້ພະນັກງານສຸກສາລາ 1 ຄັ້ງຕໍ່ປີ
- ລົງໂຄສະນາສຸກຂະສຶກສາ ແລະ ໃຫ້ຄວາມຮູ້ພື້ນຖານໃນການປ້ອງກັນເອດ ແລະ ພຕພ ໃຫ້ແກ່ປະຊາຊົນຈໍານວນ 3 ບ້ານ ແລະ ນັກຮຽນມັດທະຍົມ ມ.ປາຍ 2 ໂຮງຮຽນ
- ລົງຢ້ຽມຢາມຄອບຄົວຜູ້ຕິດເຊື້ອ HIV 3 ຄອບຄົວ 1 ຄັ້ງຕໍ່ປີ
- ລົງເອົາຂໍ້ມູນສາວບໍລິການ ແລະ ອົບຮົມກັບທີ່ກ່ຽວກັບການປ້ອງກັນເອດ ແລະ ພຕພ ຕາມຮ້ານກິນດື່ມພາຍໃນເມືອງ 1 ຄັ້ງຕໍ່ປີ
- ລົງຊຸກຍູ້ຕິດຕາມສຸກສາລາ 5 ແຫ່ງ 1 ຄັ້ງຕໍ່ປີ.

**ໂຄງການໄຂ້ຍຸງ**

**ເມືອງປາກກະດິງ:**

- ກອງປະຊຸມຖອດຖອນບົດຮຽນຢູ່ຂັ້ນເມືອງ.
- ອົບຮົມ ອສບ ຄືນກ່ຽວກັບວຽກງານເຝົ້າລະວັງ.
- ຊຸກຍູ້ຕິດຕາມແຕ່ລະຂັ້ນ (ເມືອງ-ສຸກສາລາ-ບ້ານ).
- ເຄື່ອນໄຫວສຸຂະສຶກສາ ແລະ ສ້າງຂະບວນການອະນາໄມຊຸມຊົນ ລວມທັງຢາຍຢາຂ້າໜອນນໍ້າ.
- ສະໜັບສະໜູນການດໍາເນີນງານຂອງ ຄຮບ ເພື່ອຄວບຄຸມໄຂ້ເລືອດອອກ.
- ແຈກຢາຍມຸ້ງເຄືອບຢາ ໃຫ້ສຸກສາລາ ແລະ ບ້ານເປົ້າໝາຍ (ຖ້າໄດ້)
- ຈັດການອົບຮົມດ້ານການຄຸ້ມຄອງຂໍ້ມູນຂ່າວສານພະຍາດໄຂ້ຍຸງໃຫ້ທຸກລະດັບ
- ຈັດການອົບຮົມດ້ານການຄຸ້ມຄອງສາງໃຫ້ແກ່ຂັ້ນແຂວງ, ເມືອງ ແລະ ສຸກສາລາ.

| |
|---|
| **ໂຄງການວັນນະໂລກ**<br>• ຂະຫຍາຍຕາໜ່າງປົກຄຸມດ້ວຍການນຳເອົາການບໍລິການປິ່ນປົວ ແລະ ກັນພະຍາດວັນນະໂລກໃຫ້ທົ່ວເຖິງ<br>• ປຸກລະດົມມະຫາຊົນ ແລະ ອົງການຈັດຕັ້ງໃຫ້ເຂົ້າຮ່ວມໃນວຽກງານຄວບຄຸມພະຍາດວັນນະໂລກໃຫ້ກ້ວາງຂວາງ<br>• ປະສານສົມທົບກັບວຽກງານຕ້ານເອດ, ວຽກງານສັກຢາກັນພະຍາດເປີດກ້ວາງ ແລະ ຫ້ອງກວດພະບາດເອກະຊົນເພື່ອໃຫ້ຮູ້ລະບອບການປິ່ນປົວວັນນະໂລກ ແລະ ຍຸດທະສາດຂອງດອດ (DOT)<br>• ເຜີຍແຜ່ຂໍ້ມູນຂ່າວສານໃຫ້ປະຊາຊົນເຂດຮ່າງໄກສອກຫລີກໃຫ້ທົ່ວເຖິງ<br>• ກຳນົດລະອຽດໃນເດັກນ້ອຍໃນກຸ່ມເປົ້າໝາຍທີ່ໄດ້ກິນຢາ INH<br>• ນຳໃຊ້ເຄື່ອງມືທີ່ເໝາະສົມເພື່ອປັບປຸງກິດຈະກຳຂໍ້ມູນຂ່າວສານ ແລະ ສຸຂະສຶກສາເພື່ອລົງຊອກຫາກໍລະນີສົງໄສ ໄອເກີນກ່ວາ 2 ອາທິດ ແຕ່ລະສຸກສາລາ<br>• ປັບປຸງລະບົບນຳສົ່ງຄົນເຈັບຊຸມຊົນສູ່ໂຮງໝໍ (ຕົວຢ່າງຂີ້ກະເທີ່) |

| **7. ພາກສະເໜີ** | | |
|---|---|---|
| **ຂັ້ນແຂວງ** | **ຂັ້ນເມືອງ** | **ຂັ້ນສຸກສາລາ** |
| **ໂຄງການເອດ**<br>• ໃຫ້ມີການຝຶກອົບຮົມຄືນໃໝ່ໃຫ້ພະນັກງານຂັ້ນແຂວງ, ຂັ້ນເມືອງ ຢ່າງໜ້ອຍ 1-2 ຄັ້ງ/ປີ.<br>• ຂໍອຸປະກອນຮັບໃຊ້ຄົບຊຸດ.<br>• ຂໍຄອມພິວເຕີໂນດບຸກ 01 ໜ່ວຍ.<br>• ໃຫ້ມີການໄປທັດສະນະຖອດຖອນບົດຮຽນພາຍໃນ ແລະ ຕ່າງປະເທດ 1 ຄັ້ງ/ປີ.<br>• ງົບປະມານໃຫ້ທັນກັບເວລາ ແລະ ແຜນງານທີ່ວາງໄວ້ປະຈຳແຕ່ລະໄຕຣມາດ.<br>• ເພີ້ມເງິນເບ້ຍລ້ຽງ ແລະ ເງິນຈູງໃຈໃຫ້ແກ່ພະນັກງານແຕ່ຂັ້ນແຂວງຮອດຂັ້ນທ້ອງຖິ່ນ<br><br>**ໂຄງການໄຂ້ຍຸງ**<br>• ເພີ້ມເງິນເບ້ຍລ້ຽງ ແລະ ເງິນຈູງໃຈໃຫ້ແກ່ພະນັກງານແຕ່ຂັ້ນແຂວງຮອດຂັ້ນທ້ອງຖິ່ນ<br>• ງົບປະມານໃຫ້ທັນກັບເວລາ ແລະ ແຜນງານທີ່ວາງໄວ້ປະຈຳແຕ່ລະໄຕຣມາດ.<br>• ຂໍອຸປະກອນຮັບໃຊ້ຄົບຊຸດ.<br><br>**ໂຄງການວັນນະໂລກ**<br>• ໃຫ້ມີເງິນລົງເກັບຕົວຢ່າງຂີ້ກະເທີ່ບ່ອນທີ່ຫ່າງໄກສອກຫລີກ.<br>• ໃນການຄຸ້ມຄອງການປິ່ນປົວໃນໄລຍະ 6 ເດືອນ (ບ່ອນທີ່ຢູ່ຫ່າງໄກສອກຫລີກ). ໃຫ້ມີເງິນຈູງໃຈໃຫ້ ອສບ<br>• ສຳລັບໜ່ວຍງານເອດທີ່ກວດພົບເຊື້ອເອດແລ້ວໃຫ້ມີການສົ່ງກວດຂີ້ກະເທີເພື່ອຊອກຫາເຊື້ອວັນນະໂລກ<br>• ໃຫ້ອະນຸມັດເງິນເຄື່ອນໄຫວກິດຈະກຳໃຫ້ທັນເວລາ | **ໂຄງການເອດ**<br>❖ **ເມືອງປາກກະດິງ:**<br>• ໃຫ້ມີການອົບຮົມຄືນໃໝ່ກ່ຽວກັບວຽກງານຕ້ານເອດ/ພຕພ ໃຫ້ຂັ້ນເມືອງ ຢ່າງນ້ອຍ 1-2 ຄັ້ງ/ປີ.<br>• ໃຫ້ມີການໄປທັດສະນະຖອດຖອນບົດຮຽນ 1 ຄັ້ງ/ປີ.<br>❖ **ເມືອງທ່າພະບາດ:**<br>• ໃຫ້ມີການອົບຮົມຄືນໃໝ່ກ່ຽວກັບວຽກງານຕ້ານເອດ/ພຕພ ໃຫ້ຂັ້ນເມືອງ ຢ່າງນ້ອຍ 1-2 ຄັ້ງ/ປີ.<br>• ໃຫ້ມີອຸປະກອນຄົບຊຸດ ເຄື່ອງສຽງ, ເຄື່ອງສາຍ LCD<br>• ຂໍຄອມພິວເຕີແລັບທອບ 1 ເຄື່ອງ<br>• ຂໍລົດຈັກ 1 ຄັນ<br>• ຂໍເງິນຈູງໃຈໃຫ້ແກ່ພະນັກງານກອງເລຂາຂັ້ນເມືອງ<br>• ໄປທັດສະນະຖອດຖອນບົດຮຽນພາຍໃນ ແລະ ຕ່າງປະເທດ 1 ຄັ້ງ/ປີ.<br><br>**ໂຄງການໄຂ້ຍຸງ**<br>• ໃຫ້ການນຳຊ່ອຍຊຸກຍູ້ຜ່ານທາງອຳນາດການປົກຄອງຕື່ມ ເພື່ອກະຕຸ້ນໃຫ້ຜູ້ຮັບຜິດຊອບໄດ້ເອົາໃຈໃສ່ ແລະ ມີຄວາມຮັບຜິດຊອບສູງຂື້ນຕື່ມ.<br>• ສ້າງຂະບວນການອະນາໄມບ້ານ ແລະ ທຳລາຍແຫຼ່ງເພາະຍຸງລາຍ ເປັນປະຈຳໃນແຕ່ລະບ້ານ.<br>• ໃນກໍລະນີເຈັບເປັນ (ໄຂ້) ບໍ່ໃຫ້ຊື້ຢາກິນເອງ ໃຫ້ໄປພົບແພດກ່ອນ. | ບໍ່ມີ |

| | | |
|---|---|---|
| • ໃຫ້ມີເງິນ ຄ່າອາຫານທ່ຽງ, ນ້ຳມັນ ສຳລັບຜູ້ນຳສົ່ງ ຕົວຢ່າງຈາກຂັ້ນສຸກສາລາ | **ໂຄງການອົນມະໂລກ**<br>• ສະເໜີຊື້ປຣິນເຕີ 1 ເຄື່ອງ<br>• ສະເໜີຊື້ຕູ້ໃສ່ເອກະສານ 1 ໜ່ວຍ | |

## 8. ຮູບທີ່ມງານລົງຕິດຕາມຊຸກຍູ້ການຈັດຕັ້ງປະຕິບັດວຽກງານ

**ພະແນກສາທາລະນາສຸກ ແຂວງບໍລິຄຳໄຊ**



**ຫ້ອງການສາທາລະນະສຸກເມືອງປາກກະດິງ**



ສຸກສາລານ້ຳທອນ



ສຸກສາລາປາກກະດິງ



ຫ້ອງການສາທາລະນະສຸກເມືອງທ່າພະບາດ (ໂຮງໝໍເມືອງທ່າພະບາດ)



ສຸກສາລາເຂດຫ້ວຍເລີກ



**ສຸກສາລາເຂດບ້ານທວາຍ**




**ຂອບໃຈ:**

ທີມງານລົງຕິດຕາມວຽກງານ ຂອງຄະນະກຳມະການປະສານງານກອງທຶນໂລກຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ ຂໍສະແດງຄວາມຂອບໃຈ ຄະນະຊີ້ນຳຂອງພະແນກສາທາລະນະສຸກແຂວງບໍລິຄຳໄຊ, ຫ້ອງການສາທາລະນະສຸກເມືອງປາກກະດິງ, ສຸກສາລານ້ຳທອນ, ສຸກສາລາປາກກະດິງ, ຫ້ອງການສາທາລະນະສຸກເມືອງທ່າພະບາດ, ໂຮງໝໍເມືອງທ່າພະບາດ, ສຸກສາລາບ້ານຫ້ວຍເລີກ, ແລະ ສຸກສາລາບ້ານທວາຍ ພ້ອມດ້ວຍພະນັກງານທຸກໆທ່ານທີ່ກ່ຽວຂ້ອງ ທີ່ໄດ້ໃຫ້ການຕ້ອນຮັບ ແລະ ຮ່ວມມືເປັນຢ່າງດີ ເຮັດໃຫ້ການລົງຕິດຕາມຄັ້ງນີ້ ໄດ້ປະສົບຜົນສຳເລັດຕາມແຜນການທີ່ວາງໄວ້.

ນະຄອນຫຼວງວຽງຈັນ, ວັນທີ 02 JUN 2016

ຫົວໜ້າທີມງານລົງຕິດຕາມວຽກງານ

ທ່ານ ດຣ. ພິໄລສັກ ນະໄພວົງ
ປະທານ ຄະນະກຳມະການກວດກາ

ຜູ້ສະຫລຸບສັງລວມ

ທ່ານ ບຸດສາລີ ລັດຕະນະ
ຜູ້ຊ່ວຍປະສານງານ/ບັນຊີ